# ການນຳໃຊ້ເຄື່ອງປ່າຂອງດົງຈາກປ່າທຳມະຊາດ ບ້ານ ຫ້ວຍເຫຼັກ ແລະ ບ້ານ ຫ້ວຍຮຸນນ້ອຍ ເມືອງງອຍ ແຂວງ ຫຼວງພະບາງ



## ບົດລາຍງານ ການຝຶກອົບຮົມ PRA ຂອງພະນັກງານເມືອງ ງອຍ


ໂດຍການນຳພາຂອງ

ທ່ານ ນ. ພອນສະນິດ ຜົນນະຈິດ ວິຊາການເສດຖະກິດ-ສັງຄົມ

ທ່ານ ນ. ພອນທິບ ທອງດາ ວິຊາການປ່າໄມ້

ທ່ານ ໄຊຍະສິດ  ວິຊາການປ່າໄມ້

ທ່ານ ມາຕິນ ໄກຣມານສ໌  ທີ່ປຶກສາດ້ານເຄື່ອງປ່າຂອງດົງ



**ຫຼວງພະບາງ ກຸມພາ 2007**

# ສາລະບານ

<u>ຫົວຂໍ້</u>


ບົດຄັດຫຍໍ້..........................................................................................................2

ບົດນຳ .................................................................................................................3

ຜົນໄດ້ຮັບ ............................................................................................................5

1 ສະພາບລວມຂອງບ້ານ ..........................................................................5

2 ການຈັດປະເພດເຄື່ອງປ່າຂອງດົງ .............................................................6

3 ເຂດເກັບເຄື່ອງປ່າຂອງດົງ ..........................................................................6-8

4 ດ້ານການຜະລິດກະສິກຳ ...........................................................................8-9

5 ປະຕິທິນລະດູການອາຫານ ....................................................................... 9-11

6 ລາຍຮັບ-ລາຍຈ່າຍ ..................................................................................12-13

7 ການຄັດເລືອກຜະລິດຕະພັນ ເຄື່ອງປ່າຂອງດົງ .............................................13-19

8 ການວິເຄາະບັນຫາ ............................................................................... 19-21

9 ການສຳຫຼວດພື້ນທີ່ ............................................................................... 21-27

10 ຂໍ້ມູນ 3 ລະດັບຄອບຄົວ .......................................................................... 27-29

ສະຫຼຸບ ............................................................................................................ 30-32

ຂໍ້ສະເໜີ. .........................................................................................................  33

ເອກະສານແນບທ້າຍ ........................................................................................... 34-41

# ບົດຄັດຫຍໍ້

ສໍາລັບບ້ານເປົ້າໝາຍຂອງໂຄງການແມ່ນມີຢູ່ 2 ບ້ານຄື: ບ້ານຫ້ວຍເຫຼັກ ແລະ ບ້ານຫ້ວຍຮຸນນ້ອຍ ເພື່ອສຶກສາເບິ່ງທ່າແຮງດ້ານເຄື່ອງປ່າຂອງດົງທີ່ສາມສາດສ້າງລາຍຮັບໃຫ້ແກ່ຊາວບ້ານ ແລະ ອີກຢ່າງເພື່ອ ປັນ

ຕົວຢ່າງໃນການຝຶກອົບຮົມໃຫ້ແກ່ພະນັກງານເມືອງງອຍ, ຂໍ້ມູນທີ່ເກັບແມ່ນເປັນຂໍ້ມູນເບື້ອງຕົ້ນໂດຍການນໍາໃຊ້ເຄື່ອງມື PRA (ການເກັບຂໍ້ມູນແບບມີສ່ວນຮ່ວມຂອງຊາວກະສິກອນ),ນອກຈາກນັ້ນຍັງໄດ້ສໍາພາດຄອບຄົວຈໍານວນ3 ຄອບຄົວຕໍ່ບ້ານ ຄື: ຖານະຮັ່ງມີ 1 ຄອບຄົວ, ປານກາງ 1 ຄອບຄົວ, ທຸກຈົນ 1 ຄອບຄົວເພື່ອເປັນຕົວແບບໃນການຢັ້ງຢືນຂໍ້ມູນ. ຂັ້ນຕອນທີ່ໃຊ້ໃນການເກັບກໍາຂໍ້ມູນແມ່ນມີຢູ່ 7 ຂັ້ນຕອນຄື:

1. ຈັດລະດັບຜະລິດຕະພັນເຄື່ອງປ່າຂອງດົງທີ່ສໍາຄັນ, ແຍກລະຫວ່າງ ກິນ, ຂາຍ ແລະ ຊົມໃຊ້.
2. ແຕ້ມເຂດເກັບກູ້ເຄື່ອງປ່າຂອງດົງຢູ່ໃນບ້ານ
3. ແຕ້ມປະຕິທິນລະດູການຜະລິດ
4. ແຕ້ມປະຕິທິນລະດູການອາຫານ
5. ແຕ້ມປະຕິທິນ ລາຍຮັບ-ລາຍຈ່າຍ
6. ມາດຖານການຄັດເລືອກຜະລິດຕະພັນ
7. ວິເຄາະບັນຫາຜະລິດຕະພັນທີ່ສໍາຄັນ

ພາຍຫຼັງສໍາເລັດກິດຈະກໍາມື້ທີ່1 ແລ້ວ. ມື້ທີ່2 ແມ່ນໄດ້ເດີນສໍາຫຼວດປ່າເພື່ອສຶກສາເບິ່ງສະພາບລວມຂອງປ່າ ແລະ ນິເວດຂອງເຄື່ອງປ່າຂອງດົງ ມື້ທີ່3 ຈະມາສະຫຼຸບຂໍມູນຄືນໃນ2ມື້ທີ່ເຮັດກັບຊາວວ່າຂໍມູນເກັບຖືກຕ້ອງແລ້ວບໍ.ກ່ອນຈະເອົາຂໍມູນອອກຈາກບ້ານ. ຜ່ານການເກັບກໍາຂໍມູນໃນຄັ້ງນີສາມາດສະຫຼຸບໄດ້ເຖີງຜະລິດຕະພັນທີ່ສໍາຄັນຂອງແຕ່ປະເພດຄື:

- ເຄື່ອງປ່າຂອງດົງສໍາຄັນລໍາລັບກິນ ປາ, ໝໍ່ຂົມ, ກຸ້ງ, ໝໍ່ຫົກ, ປູຫີນ
- ເຄື່ອງປ່າຂອງດົງສໍາຄັນຂາຍ ປໍສາ, ແຂມ, ຄັ່ງ, ເມືອກ
- ເຄື່ອງປ່າຂອງດົງສໍາຄັນຊົມໃຊ້ ຟື້ນ, ໄມ້ຈິ່ງ, ໄມ້ເຮ້ຍ

ເຄື່ອງປ່າຂອງດົງເລົ່າແມ່ນເກີດຂື້ນແບບກະແຈກກະຈາຍໄປທົ່ວພື້ນທີ່ຂອບເຂດຂອງບ້ານເຂດທີ່ມີເຄື່ອງປ່າຂອງດົງຫຼາຍກ່ວາໝູ່ແມ່ນເຂດຜາຕູບ(ບ.ຫ້ວບເຫຼັກ),ເຂດຫ້ວຍກະເນງ(ບຫ້ວຍຮຸນນ້ອຍ) ແລະ ມີລະດູການທີ່າແຕກຕ່າງກັນ. ເຄື່ອງປ່າທີ່ມີຫຼາຍ ແລະ ສາມາດຂາຍເປັນສິນຄ້າໄດ້ແມ່ນ ແຂມ, ປໍສາ, ຄັ່ງ



# ຄຳນຳ

ເມືອງງອຍ. ເປັນເມືອງທີ່ມີຄວາມອຸດົມສົມບູນທາງດ້ານເຄືອງປ່າຂອງດົງ.ຍ້ອນປະຈຸບັນເຂົາເຈົ້າໄດ້ມີການແບ່ງເຂດທຳການຜະລິດ, ເຂດຫວງຫ້າມ ແລະ ທາງຂັ້ນເທີງມີລະບຽບຫ້າມຖາງປ່າແກ່ເພື່ອເຮັດການ **ຜະລິດໃນ** ການສຳຫຼວດພື້ນທີ່ປ່າແມ່ນ.ບໍ່ໄດ້ສຳຫຼວດໝົດພື້ນທີ່ຂອງບ້ານພຽງແຕ່ເລືອກເອົາບາງເຂດເທົ່ານັ້ນ. ຜ່ານການລົງສຳຫຼວດຕົວຈິງຂອງ 2 ບ້ານນີເຫັນວ່າສ່ວນຫຼາຍເປັນພື້ນທີ່ປ່າເລົ່າອ່ອນທີ່ມີອາຍຸ 2-4 ປີ. ແລະມີຄວາມຄອ້ຍຊັນສູງຢູ່ເຂດນີປ່າແກ່ແມ່ນມີໜ້ອຍເຊີ່ງເປັນລັກສະນະປ່າປະສົມ ແລະ ມີສາຍນ້ຳໄຫຼຕາມຮອມຜາ.

ຢູ່ເຂດພື້ນທີ່ປ່າເລົ່າອ່ອນ ແລະ ແຄມຫ້ວຍມີພືດພັນ ແລະ ເຄື່ອງປ່າຂອງດົງເກີດຢູ່ຫຼາຍຊະນິດເຊັ່ນ: ເມືອກ, ປໍສາ, ແຂມ, ກົກຕາວ, ໝາກປີປ່າ, ຜັກກູດນ້ຳ, ຜັກຮາກ ແລະ ອື່ນໆ.
ສ່ວນເຂດປ່າແກ່ຈະປະກອບມີ: ໄມ້ຊາງ, ໄມ້ທິກ, ໄມ້ຊອດ, ໄມ້ເຮ້ຍ, ໄມ້ໄລ່, ໄມ້ກໍ, ໄມ້ຟາວ, ໄມ້ດູ່, ໄມ້ຊີ້, ໄມ້ຫຽນ, ເຄືອ3ທ່າງ, ສະຄານ, ເຫັດສະນຸ້ນ, ເຫັດບົ້, ລາຍລະອຽດແມ່ນຢູ່ປະຕິທິນລະດູການອາຫານ ແລະ ການຈັດປະເພດຄວາມສຳຄັນ
ຂອງກິນ,ຂາຍ, ຊົມໃຊ້.

ດັ່ງນັ້ນ, ເພື່ອຕອບສະໜອງທາງດ້ານ ລາຍຮັບໃຫ້ແກ່ ຊາວບ້ານໃນຂົງເຂດນີທາງຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ ກໍ່ຄືໂຄງການສຸພານິມິດ. ຈື່ງມີທິດທາງໃນການສຶກສາເພື່ອເກັບກຳຂໍ້ມູນກ່ຽວກັບເຄື່ອງປ່າຂອງດົງ, ຊອກຫາພະລິດຕະພັນທີ່ເປັນບູລິມະສິດ ເພື່ອ ການຕະຫຼາດ ແລະ ການພັດທະນາຄູ້ມຄອງຈັດສັນເຄື່ອງປ່າຂອງດົງ ນຳໃຊ້ແບບຍືນນານຕະຫຼອດ ແລະ ໄດ້ຜົນປະໂຫຍດຫຼາຍທີ່ຈະຫຼາຍໄດ້, ການເກັບກຳຂໍ້ມູນໃນຄັ້ງນີ້ແມ່ນສູນຄົ້ນຄວ້າກະສິກຳ ແລະ ປ່າໄມ້ພາກເໜືອເປັນຜູ້ຕອບສະໜອງທາງດ້ານເຕັກນິກ ແລະ ວິທີການໃຫ້ກັບທາງໂຄງການ.

## I. ຈຸດປະສົງ

1. ເພື່ອເປັນການຝຶກອົບຮົມທາງດ້ານເຕັກນິກ ແລະ ວິທີການຈັດຕັ້ງປະຕິບັດໃຫ້ກັບພະນັກງານໂຄງ
2. ການ ແລະ ພະນັກງານປະຈຳເມືອງ.
3. ເພື່ອເກັບກຳຂໍ້ມູນເບື້ອງຕົ້ນກ່ຽວກັບເຄື່ອງປ່າຂອງດົງໂດຍນຳໃຊ້ເຄື່ອງມືແບບ PRA
4. ເພື່ອສຳຫຼວດພື້ນທີ່ເພື່ອສຶກສາເບີ່ງສະ ພາບລວມຂອງປ່າ ແລະ ລະບົບນິເວດຂອງເຄື່ອງປ່າຂອງດົງ

## II. ສະຖານທີ່

ສຳລັບບ້ານທີ່ຈະສຶກສາມີຢູ່ທັງໝົດ 2 ບ້ານຄື : ບ້ານຫ້ວຍເຫຼັກ ແລະ ບ້ານຫ້ວຍຮຸນນ້ອຍເພື່ອເປັນຕົວຢ່າງໃນການຝຶກອົບຮົມໃຫ້ແກ່ພະນັກງານງານເມືອງ.

## III. <u>ເວລາໃນການຈັດຕັ້ງປະຕິບັດ</u>

ສຳລັບການຈັດຕັ້ງປະຕິບັດໄດ້ໃຊ້ເວລາຢູ່ 9 ວັນຄື:

- ວັນທີ່ 13/02/07 ຝຶກອົບຮົມວິທີການນຳໃຊ້ເຄື່ອງມື PRA ເບື້ອງຕົ້ນໃຫ້ແກ່ພະນັກງານເມືອງ (ຢູ່ສະໂມສອນເມືອງງອຍ)
- ວັນທີ່ 14-19/02/07 ປະຕິບັດກິດຈະກຳຕ່າງໆຢູ່ກັບບ້ານ ແລະ ລວບລວມຂໍ້ມູນ
- ວັນທີ່ 20/02/07 ເດີນທາງກັບຫຼວງພະບາງ

## IV. <u>ວິທີການຈັດຕັ້ງປະຕິບັດ</u>

ສຳລັບການຈັດຕັ້ງປະຕິບັດປະກອບມີ 5 ຂັ້ນຕອນຄື :

<u>ຂັ້ນຕອນທີ່</u> 1

ແນະນຳວິທີການຈັດຕັ້ງປະຕິບັດໃຫ້ກັບນັກສຳມະນາກອນເມືອງ ງອຍ ພ້ອມທັງນັດສຳພາດຊາວກະສິກອນ

<u>ຂັ້ນຕອນທີ່</u> 2

ລວບລວມຊາວກະສິກອນໝົດທຸກຄອບຄົວພາຍໃນບ້ານເພື່ອສະເໜີຈຸດປະສົງ, ຫຼັງຈາກນັ້ນເລືອກເອົາ 20 ຄອບຄົວເພື່ອເປັນຕົວແທນໃຫ້ແກ່ບ້ານ (ມີຄອບຄົວຮັ່ງມີ, ປານກາງ ແລະ ທຸກຈົນ) ເພື່ອປະຕິບັດກິດຈະກຳນຳ.

<u>ຂັ້ນຕອນທີ່</u> 3

ອະທິບາຍຂັ້ນຕອນ ແລະ ວິທີການນຳໃຊ້ອຸປະກອນ, ຈາກນັ້ນແມ່ນໃຫ້ຊາວກະສິກອນປະຕິບັດເອງ, ເຊິ່ງມີບັນດາເຄື່ອງມືຕ່າງໆດັ່ງລຸ່ມນີ້ :

1. ຈັດລະດັບຜະລິດຕະພັບເຄື່ອງປ່າຂອງດົງທີ່ສຳຄັນ, ແຍກລະຫວ່າງ ກິນ, ຂາຍ ແລະ ຊົມໃຊ້.
2. ແຕ້ມເຂດເກັບກູ້ເຄື່ອງປ່າຂອງດົງຢູ່ໃນບ້ານ
3. ແຕ້ມປະຕິທິນລະດູການຜະລິດ
4. ແຕ້ມປະຕິທິນລະດູການອາຫານ
5. ແຕ້ມປະຕິທິນ ລາຍຮັບ-ລາຍຈ່າຍ
6. ມາດຖານການຄັດເລືອກຜະລິດຕະພັນ
7. ວິເຄາະບັນຫາຜະລິດຕະພັນທີ່ສຳຄັນ

<u>ຂັ້ນຕອນທີ່</u> 4

ສຳຫຼວດພື້ນທີ່ເຄື່ອງປ່າຂອງດົງ ຂອງບ້ານໂດຍແມ່ນ ຊາວບ້ານເປັນຜູ້ນຳພາ.

<u>ຂັ້ນຕອນທີ່</u> 5

ລວບລວມຊາວບ້ານໝົດບ້ານສະຫຼຸບບັນດາກິດຈະກຳທີ່ເຮັດຜ່ານມາ.

# ຜົນໄດ້ຮັບ

1. ສະພາບລວມຂອງບ້ານ

ຜ່ານການລົງສຳຫຼວດຕົວຈິງຂອງ 2 ບ້ານນີ້ເຫັນວ່າສ່ວນຫຼາຍເປັນພື້ນທີ່ປ່າເລົ່າອ່ອນທີ່ມີອາຍຸ 2-4 ປີ. ແລະ ມີຄວາມຄອ້ຍຊັນສູງຢູ່ເຂດນີ້ປ່າແກ່ແມ່ນມີ ໜ້ອຍເຊິ່ງເປັນລັກສະນະປ່າປະສົມ(ໄມ້ຈິ່ງ, ໄມ້ປ່ອງ) ເນື່ອງຈາກວ່າປ່າດັ່ງກ່າວຖືກຖາງເຮັດການຜະລິດມາກ່ອນ ແລະ ມີການລັກຕັດໄມ້ຈິ່ງເພື່ອມາຂາຍ.

ຕາຕະລາງ ສະພາບລວມຂອງບ້ານ

| ຂໍ້ມູນຂອງບ້ານ | ບ້ານຫ້ວຍເຫຼັກ | ບ້ານຫ້ວບຮຸນນ້ອຍ |
|---|---|---|
| ຈຳນວນຄອບຄົວ | 92 ຄ,ຄ | 58 ຄ,ຄ |
| ▪ ຄອບຄົວຮັ່ງມີ | 15 ຄ,ຄ | 6 ຄ,ຄ |
| ▪ ຄອບຄົວປານກາງ | 57 ຄ,ຄ | 18 ຄ,ຄ |
| ▪ ຄອບຄົວທຸກຈົນ | 20 ຄ,ຄ | 34 ຄ,ຄ |
| ຈຳນວນພົນລະເມືອງ | 517 ຄົນ | 471 ຄົນ |
| ເພດຍິງ | 266 ຄົນ | 212 ຄົນ |
| ຊົນເຜົ່າ | ມີເຜົ່າດຽວ(ຂະມຸ) | 2 ຊົນເຜົ່າ:ລາວສູງ 5 ຄ,ຄ ມີພົນລະເມືອງ 46 ຄົນ, ຍິງ16 ຄົນ ລາວເທິງ 53 ຄ,ຄມີພົນລະເມືອງ 425 ຄົນ, ຍິງ 196 ຄົນ |
| ເນື້ອທີ່ດິນປຸກສ້າງ | 30 | 350ເຮັກຕາ |
| ເນື້ອທີ່ປ່າໄມ້ | 2396,08 | 3000ເຮັກຕາ |
| ເນື້ອທີ່ນາ | 5,2 | |
| ເນື້ອທີ່ໄຮ່ | 276 | |
| ເນື້ອທີ່ດິນກະສິກຳ | 165,92 | 500ເຮັກຕາ |
| ໝູ | 80 | 820ໂຕ |
| ງົວ | 90 | 73 ໂຕ |
| ຄວາຍ | 37 | 26ໂຕ |
| ແບ້ | 50 | 48ໂຕ |

| | | |
|---|---|---|
| ສັດປີກ | 1000 | 1350ໂຕ |

**2. ການຈັດປະເພດເຄື່ອງປ່າຂອງດົງທີ່ສຳຄັນ**

ການຈັດປະເພດເຄື່ອງປ່າ ຂອງດົງແມ່ນຊາວກະສິກອນເປັນຜູ້ຈັດເອງ,ໂດຍ ໄດ້ມີການຄັດເລືອກ ອອກເປັນ 3 ປະເພດຄື: ກິນ, ຂາຍ ແລະ ຊົມໃຊ້. ຄວາມສຳຄັນແມ່ນອີງຕາມ ລາຄາ, ຄວາມຕ້ອງການຂອງ ຕະຫຼາດ, ລາຍຮັບຂອງຜົນຜະລິດສູງ, ນອກຈາກນັ້ນແລ້ວຍັງໄດ້ຄຳນຶງເຖິງການ ນຳເອົາມາບໍລິໂພກ ແລະ ການຊົມໃຊ້ພາຍໃນຄົວເຮືອນອີກ.

| ຊະນິດການນຳໃຊ້ | ຊື່ຜະລິດຕະພັນທີ່ສຳຄັນ | |
|---|---|---|
| | ຫ້ວຍເຫຼັກ | ຫ້ວຍຮຸນນ້ອຍ |
| *ກິນ* | ປາ | ໜໍ່ໄມ້ຫົກ |
| | ໜໍ່ຂົມ | ປາ |
| | ກຸ້ງ | ປູຫີນ |
| *ຂາຍ* | ປໍສາ | ດອກແຂມ |
| | ແຂມ | ປໍສາ |
| | ຄັ່ງ | ເມືອກ |
| *ຊົມໃຊ້* | ໄມ້ຟື້ນ | ຟື້ນ(ໄມ້ຈາງຕາຍ) |
| | ໄມ້ຈິງ | ໄມ້ເຈິງ(ປຸກສ້າງ) |
| | ໄມ້ເຮ້ຍ | ໄມ້ເຮ້ຍ |

ອີງຕາມການຈັດປະເພດເຫັນວ່າສຳຄັນສຳລັບຂາຍແມ່ນປໍສາ ແລະ ແຂມເພາະວ່າປະຈຸບັນຜະລິດຕະພັນທັງ 2 ຢ່າງມີຫຼາຍ ລາຄາດີຄືມີແມ່ຄ້າມາເກັບຊື້ກັບບ້ານ. ສຳຄັນສຳລັບກິນແມ່ນ ປາ, ໜໍ່ໄມ້ຫົກ, ໜໍ່ຂົມ ນອກຈາກນີ້ແລ້ວຍັງມີຜັກໝອກ, ກຸ້ງທີ່ສາມດກິນໄດ້ຕະຫຼອດປີ. ສຳຄັນສຳລັບຊົມໃຊ້ແມ່ນ ຟື້ນ, ໄມ້ຈິ່ງ, ໄມ້ເຮ້ຍ ແມ່ນໃຊ້ເປັນເຮັດຢູ່,ຄອກເປັດ, ໄກ່, ອ້ອມຮົ້ວແລະ ອື່ນໆອີກຫຼາຍຊະນິດ(ລາຍລະອຽດແມ່ນຢູ່ ເອກະສານແນບທ້າຍໜ້າທີ່.33-34)

3. **ແຜນທີ່ຂອບເຂດການເກັບກູ້ ຄປດ ຂອງບ້ານ**

ແຜນທີ່ດັ່ງກ່າວແມ່ນຖືກແຕ້ມຂຶ້ນໂດຍຄວາມນຶກຄິດຂອງຊາວກະສິກອນເອງ, ການແຕ້ມແມ່ນແຕ້ມ ແບບລັກສະນະເປັນກຸ່ມໝົດບ້ານ, ເຊິ່ງປະກອບມີ ເສັ້ນທາງ, ຂອບເຂດບ້ານ, ພູຜາປ່າໄມ້ ແລະ ຂອບເຂດ ເກັບເຄື່ອງປ່າຂອງດົງຂອງຊາວກະສິກອນ.ເພາະແຜນທີ່ນີ້ພຽງແຕ່ຢາກຮູ້ເຂດທີ່ສຳຄັນລຳລັບເກັບເຄື່ອງປ່າ ຂອງດົງ ແລະ ເຂດທີ່ມີເຄື່ອງປ່າຂອງດົງຫຼາຍຄື:

ບ້ານຫ້ວຍຮຸນນ້ອຍ

ປະກອບມີຢູ່ 2 ເຂດໃຫຍ່ຄື: ເຂດຫ້ວຍໝາກແຄນ ແລະ ເຂດຫ້ວຍກະເນງ ແຕ່ລະເຂດລ້ວນແຕ່ມີເຄື່ອງ ປ່າຂອງດົງຫຼາຍຊະນິດທີ່ມີຄວາມໜາແໜ້ນແຕກຕ່າງກັນເຊັ່ນ:

ເຂດຫ້ວຍໝາກແຄນ

ຫ່າງຈາກບ້ານປະມານ1.3ຊົ່ວໂມງ, ຢູ່ຂອບເຂດນີ້ມີເຄື່ອງປ່າຂອງດົງຫຼາຍຊະນິດທີ່ມີລະດັບຄວາມໜາແໜ້ນແຕກຕ່າງກັນເຊັ່ນ: ແຂມ, ເນືອກ, ເຄືອ 3 ທາງ, ໄມ້ທິກ, ຫວນຍ, ໝໍ່ຂີມ, ໝາກປີ, ຜັກກູດນໍ້າ, ໃບບອບຜັກເນົ່າ, ເຫັດຕາບ, ໝູປ່າ, ຟານ, ເຫັງນ, ໄກ່ປ່າ, ໂຕເໜັນ, ໂຕແມ້, ປໍສາ, ປູທິນ,ໝູຫວາຍ, ໝໍ່ຂ່າ, ໄມ້ຊອດ, ໄມ້ເຮັບ, ໄມ້ຈີງ, ເຫັດປວກ, ເຫັດບົ້, ເຫັດສະນຸ້ນ, ແມງກອກ, ຮອກ,ຈ້ອນ, ເລັນ, ນົກ, ໄມ້ຝື້ນ, ແຕ່ຊະນິດທີ່ມີຫຼາຍກ່ວາໝູ່ແມ່ນ ແຂມ, ໄມ້ທິກ, ປໍສາ, ເຄືອ 3 ທາງ ແລະ ເນືອກ

ເຂດຫ້ວຍກະເນງ

ຫ່າງຈາກບ້ານປະມານ 1.3 ຊົ່ວໂມງ, ຜະລິດຕະພັນທີ່ມີຫຼາຍກວ່າໝູ່ຢູ່ເຂດນີ້ແມ່ນ ແຂມ, ໄມ້ທິກ, ປໍສາ, ເຄືອ 3 ທາງ, ຄັ່ງ(ຄັ່ງປູກ). ນອກຈາກນີ້ແລ້ວຍັງ ມີຊະນິດອື່ນໆອີກເຊັ່ນ: ເນືອກ, ໝາກຕາວ, ໝູປ່າ, ນົກ, ຮອກ, ຈ້ອນ, ອົ້ນ, ຕຸ້ນ, ໂຕລີງ, ໂຕຫອນ. ໂຕເຍືອງ, ຟານ, ໄກ່ປ່າ, ເຈ້ຍ, ຜັກຮາກ, ຜັກຫວານ, ໄມ້ເຮ້ຍ, ໝໍ່ຂີມ, ຫົວຂ່າ, ໃບບອບ, ເຫັດ, ໄມ້ຟື້ນ

ຖ້າທຽບລະຫວ່າງ 2 ເຂດແລ້ວເຫັນວ່າເຂດຫ້ວຍກະເນງມີຜະລິດຕະພັນເຄື່ອງປ່າຂອງດົງ ຫລາຍກ່ວາ,ເນື່ອງຈາກວ່າເຂດດັ່ງກ່າວແມ່ນເຂດທີ່ມີເນື້ອທີ່ກ້ວາງ ແລະ ມີເຄື່ອງປ່າຂອງດົງຫຼາຍມາກີ ແລະ ປະຊາຊົນພາຍໃນບ້ານກໍ່ມັກໄປຫາຫຼາຍກວ່າເຂດອື່ນໆ.

ບ້ານຫ້ວຍເຫຼັກ

ປະກອບມີຢູ່ 4 ເຂດໃຫຍ່ຄື: ເຂດຫ້ວຍປຸງ, ເຂດຫ້ວຍຂ້ອງ, ເຂດຫ້ວຍອ່ຽນ ແລະ ເຂດຜາຕູບ ແຕ່ລະເຂດລ້ວນແຕ່ມີ ເຄື່ອງ ປ່າຂອງດົງຫຼາຍຊະນິດທີ່ມີຄວາມໜາແໜ້ນແຕກຕ່າງກັນເຊັ່ນ:

ເຂດຫ້ວຍປຸ່ງ

ຫ່າງຈາກບ້ານປະມານ 15 ນາທີ,ຢູ່ຂອບເຂດນີ້ມີເຄື່ອງປ່າຂອງດົງຫຼາຍຊະນິດທີ່ມີລະດັບຄວາມໜາແໜ້ນແຕກຕ່າງກັນເຊັ່ນ: ໝາກຕາວ, ເນືອກ, ປໍສາ, ແຂມ, ສະຄ່ານ, ດູກເດືອ, ໄມ້ຈີງ, ໄມ້ແຮ້, ເຫັດສະນຸ້ນ, ເຫັດບົ້. ຍອດຕາວ, ຜັກຮາກ, ຜັກຫວານ, ຜັກເນົ່າ, ໄຄ. ແຕ່ເຄືອງປ່າຂອງດົງທີ່ມີຫຼາຍກວ່າໝູ່ຢູ່ເຂດນີ້ແມ່ນ: ໝາກຕາວ, ສະຄ່ານ, ດກຸເດືອ ແລະ ປໍສາ.

ເຂດຫ້ວຍຂ້ອງ

ຫ່າງຈາກບ້ານປະມານ 30 ນາມທີ , ຜະລິດຕະພັນທີ່ມີຫຼາຍກວ່າໝູ່ຢູ່ໃນເຂດນີ້ແມ່ນ ປໍສາ, ຕາວ.

ໄມ້ລຽງ ນອກຈາກນີ້ແລ້ວຍັງ ມີຊະນິດອື່ນໆອີກເຊັ່ນ: ແຂມ, ເນືອກ, ໄມ້ເຮັຍ, ໄມ້ແຮ້, ໄມ້ທີກ, ໄມ້ຊາງ, ເຫັດຊາງ, ເຫັດສະນຸ້ນ, ເຫັດກະດ້າງ, ໄມ້ຈິງ, ໝາກປີ, ກາບລາງ. ໝາກແໜ່ງ, ໝາກຂ່າ, ຫວາຍ ແລະ ໂຕແມ້.

<u>ເຂດໝອງອ່ຽນ</u>

ຫ່າງຈາກບ້ານປະມານ 15 ນາທີ , ຜະລິດຕະພັນທີ່ມີຫຼາຍກວ່າໝູ່ຢູ່ໃນເຂດນີ້ແມ່ນ ໄມ້ຊອດ ແລະ ໄມ້ຊາງ. ນອກຈາກນີ້ແລ້ວຍັງ ມີຫຼາຍໆຊະນິດອີກເຊັ່ນ: ແຂມ, ປໍສາ. ໝໍ່ໄລ່, ໄມ້ລຽງ.

<u>ເຂດຜາຕູບ</u>

ຫ່າງຈາກບ້ານປະມານ 15 ນາທີ, ຢູ່ເຂດນີ້ແມ່ນມີເຄື່ອງປ່າຂອງດົງຄື: ແຂມ, ປໍສາ,ເນືອກ, ໝາກຂ່າ. ໝາກແໜ່ງ, ດຸກເດືອ. ກາບລາງ, ໂຕແມ້, ໝໍ່ຂົມ, ໝໍ່ໄລ່, ໝໍ່ທີກ, ໄມ້ເຮັຍ, ໄມ້ແຮ້, ໝໍ່ລັນ, ໄມ້ລຽງ, ໝາກຕາວ, . ແຕ່ຊະນິດທີ່ມີຫຼາຍກວ່າໝູ່ຢູ່ເຂດນີ້ແມ່ນ ແຂມ, ປໍສາ, ໂຕແມ້ ແລະ ໝາກຕາວ.

ຖ້າທຽບລະຫວ່າງ 4 ເຂດແລ້ວເຫັນວ່າເຂດຜາຕູບມີຜະລິດຕະພັນເຄື່ອງປ່າຂອງດົງ ຫລາຍ ກ່ອນ, ຍ້ອນວ່າເຂດຜາຕູບມີເນື້ອທີ່ ທີ່ມີຄວາມອຸດົມສົມບູນ ແລະ ມີພື້ນທີ່ກ້ວາງກວ່າເຂດອື່ນ. ເຄື່ອງປ່າຂອງດົງ ກໍ່ມີມາແຕ່ກ່ອນແລ້ວ ແລະ ຊາວບ້ານກໍ່ມັກໄປຫາຢູ່ແຕ່ເຂດນີ້.

**4. ຕາຕະລາງ ລະດູການ ຜະລິດ**

ບ້ານຫ້ວຍເຫຼັກ ແລະ ບ້ານຫ້ສຍຮຸນນ້ອຍ ການຜະລິດທາງດ້ານ ກະສິກຳແມ່ນມີຫຼາຍເຊັ່ນ: ເຮັດໄຮ່ເຂົ້າປະສົມຖົ່ວແຮເພື່ອປ່ອຍຄັ່ງ ແລະ ເກັບເຄື່ອງປ່າຂອງດົງເປັນອາຊີບຫຼັກຂອງຄອບຄົວ, ຮອງລົງມາແມ່ນໄປເກັບເຮັດສວນ (ຖົ່ວດິນ, ຖົ່ວຂຽວ, ສາລີ, ຜັກ, ໝາກເດືອຍ, ໝາກງາ) ແລະ ການບໍລິການອື່ນໆ, ສຳລັບຊ່ວງການເກັບເຄື່ອງປ່າຂອງດົງ ແມ່ນຊ່ວງທີ່ຫວ້າງວຽກຂອງຊາວກະສິກອນເທົ່ານັ້ນ.

| **ກິດຈະກຳ** | **ເດືອນ** | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|
| **ບ ຫ້ວຍເຫຼັກ, ບ ຫ້ວຍຮຸນນ້ອຍ** | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| ເຮັດໄຮ່ເຂົ້າປະສົມ**ຖົ່ວແຮ່** ແລະ ໄມ້ລຽງ | → | ຖາງ → | → | ຈູດ → | ປູກ → | ເສຍຫຍ້າ → | → | → | → | ເກັບກູ້ → | → | |
| **ປ່ອຍຄັ່ງ ແລະ ເກັບກູ້ຄັ່ງ** | | | | ~~ເກັບກູ່ແລະ~~ → ປູກເທືອທີ2 | | | | | | | → ປ່ອຍເທື່ອ ທີ່1 | |
| **ສວນໝາກເຜັດ** | | → | → | → | → | → | → | → | → | → | → | |

| | | ລ່າວ | ຈູດຮີ | ປູກ | ບົວລະບັດ | ເກັບກູ້ ແລະ ອານາໄມ |
|---|---|---|---|---|---|---|
| **ສວນສາລີ** | | ລ່າວ | ຈູດ ຮີ | ປູກ | ບົວລະບັດ | ເກັບກູ້ |
| **ສວນໝາກງາ** | | ລ່າວ | ຈູດ | ປູກ | ອານາໄມ | ເກັບກູ້ |
| **ສວນຜັກແຄມນ້ຳ** | | | | | | ຖາງ → ປູກ → ເກັບກູ້ |
| **ເຮັດນາ** | | ກະກຽມດິນ | ຕົກກ້າ | ຖາງຄັນນາ ໄຖ,ຄາດ | ປັກດຳ | ອານາໄມ → ເກັບກ້ຽວ |
| **ລ້ຽງສັດໃຫຍ່** | ປ່ອຍ | | ໃຊ້ງານ | | ປ່ອຍຈະມີເຂດລ້ຽງ, ລ້ຽງເປັນກຸ້ມ | |
| **ລ້ຽງປາ** | ກະກ້ຽມໜອງ | | ປ່ອຍປາ | | ບົວລະບັດ ແລະຂາຍອອກ | |
| **ລະດູການເກັບເຄືອງປ່າຂອງດົງ** | | | | | | |
| ແຂມ | | ເກັບກູ້ | | | | |
| ປໍສາ (ໃນພື້ນທີ່ຂອງບຸກຄົນ) | | ເກັບກູ້ | | | | ເກັບກູ້ |
| ເປືອກເມືອກ | ເກັບກູ້ | | | | | ເກັບກູ້ |
| ເຄືອ 3 ທາງ | ເກັບກູ້ | | | | | ເກັບກູ້ |
| ໝາກຕາວ | | | | | | ເກັບກູ້ |
| ຫົວດຸກເດືອ | | | | | | ເກັບກູ້ |
| ກາບລາງ(ກາບໄມ້ປ່ອງ) | | | | | ເກັບກູ້ | |
| ໂຕແມ້ | | | | | | ເກັບກູ້ |
| ໝາກປີ | ເກັບກູ້ຕະຫຼອດປີ | | | | | |

5. ຕາຕະລາງ ລະດູການອາຫານ

ປະຕິທິນລະດູການອາຫານສາມາດຮູ້ເຖິງຄວາມສຳຄັນ ແລະ ບົດບາດຂອງເຄື່ອງປ່າຂອງດົງທີ່ໃຊ້ເປັນອາຫານ ແລະ ຊ່ວງລະດູການຂອງແຕ່ລະຊະນິດທີ່ເກັບອອກຈາກປ່າເພື່ອມາກິນ, ຂາຍແຕ່ລະຊະນິດແມ່ນມີລະດູການທີ່ແຕກຕ່າງກັນ. ບາງຊະນິດແມ່ນມີຕະຫຼອດປີເຊັ່ນ:ຜັກໝອກຍອດຫວາຍ, ສະຄ່ານ, ປາ, ກຸ້ງ ແລະ ໝາກປີປ່າ.

ນອກຈາກນີ້ແລ້ວຍັງມີຫຼາຍຊະນິດທີ່ອອກຕາມແຕ່ລະດູການຂອງມັນເຊັ່ນ: ປະເພດໜໍ່ໄມ້, ຜັກ ແລະ ເຫັດ, ຈຳພວກອາຫານເລົ່ານີ້ສ່ວນຫຼາຍແມ່ນແມ່ຍິງເປັນຜູ້ໄປຫາ.
(ລາຍລະອຽດຢູ່ໃນຕາຕະລຸ້ມນີ້)

| ລ/ດ | ຊະນິດອາຫານ | ເດືອນ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| | ຜັກໝອກ | o | o | o | o | o | o | oo | ooo | o | o | o | o |
| | ຜັກຫວານ | | | | oo | ooo | o | | | | | | |
| | ຜັກຮາກ | | oo | oo | oo | ooo | o | | | | | | |
| | ຜັກເນົ່າ | | o | o | ooo | oo<br>ooo | ooo<br>oo | o<br>oo | o<br>o | o | | | |
| | ຜັກກູດນ້ຳ | o | o | o | oo<br>oo | ooo<br>ooo | oo<br>ooo | o | o | o | | | |
| | ຜັກກູດໄຮ່(ກູດງ້ອງ) | | | | | o | ooo<br>o | oo<br>ooo | o<br>oo | | | | |
| | ຜັກແວ່ນ | | | | | | o | ooo | oo | o | | | |
| | ໜໍ່ທີກ | | | | | | o<br>oo | ooo<br>ooo | o<br>o | | | | |
| | ໜໍ່ເຮ້ຍ | | | | | o<br>oo | ooo<br>ooo | oo<br>o | o | | | | |
| | ໜໍ່ໄລ່ | | | | | | | oo | o<br>ooo | oo<br>o | o | | |
| | ໜໍ່ຊອດ | | | | | | oo | oo<br>ooo | ooo<br>o | o | | | |
| | ໜໍ່ຊາງ | | | | | | o<br>oo | ooo<br>ooo | oo<br>o | o | | | |
| | ໜໍ່ຂົມ | o | o | oo<br>oo | ooo<br>ooo | o<br>ooo | oo | | | | | | |
| | ໜໍ່ລັນ | | | | | o | ooo | | | | | | |
| | ໜໍ່ຫວາມ | | | | | oo | ooo | o | | | | | |
| | ຍອດຫວາຍ | o<br>o | o<br>o | o<br>o | o<br>o | o<br>o | o<br>o | o<br>o | o<br>o | o<br>o | o<br>oo | oo<br>ooo | o<br>ooo |
| | ໜໍ່ຂ່າປ່າ | | oo | oo<br>ooo | ooo<br>ooo | oo<br>o | | | | | | | |
| | ສະຂ່ານ | oo<br>o | ooo<br>ooo | oo<br>oo | o<br>o | o<br>o | o<br>o | o<br>o | o<br>o | o<br>o | o<br>o | o<br>o | o<br>o |
| | ໃບບອນ | oo<br>oo | ooo<br>oo | oo<br>o | o<br>o | | | | | | | | o |

| | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | ເຫັດສະນຸ່ນ | | <br>o | <br>o | <br>o | <br>oo | o<br>ooo | ooo<br>oo | oo<br>o | o<br>o | <br>o | <br>o | <br>o |
| | ເຫັດປວກ | | | | | | oo<br>oo | oo<br>o | | | | | |
| | ເຫັດປີ້ | | | | | | | o<br>o | oo<br>ooo | o | | | |
| | ເຫັດຊາງ | | | | | | <br>o | o<br>ooo | oo | | | | |
| | ເຫັດຕາບ | | | | | | o | oo<br>o | o<br>ooo | | | | |
| | ເຫັດກະດ້າງ(ເຫັດຕະບັງ) | | | o | oo | o<br>o | <br>ooo | | | | | | |
| | ເຫັດເຜິາ | | | | oo | oo | | | | | | | |
| | ປາ | o<br>o | o<br>o | oo<br>o | ooo<br>o | o<br>o | o<br>oo | o<br>ooo | o<br>ooo | o<br>o | o<br>o | o<br>o | o<br>o |
| | ປູ | <br>o | <br>o | <br>o | <br>o | <br>o | <br>oo | <br>oo | o<br>ooo | ooo<br>ooo | <br>o | <br>o | <br>o |
| | ຫ້ອຍ | o | o | o | o | o | o | o | o | O | o | o | o |
| | ເຄືອງສ້ອນ | o | o | o | o | o | o | oo | oo | O | o | o | o |
| | ກຸ້ງ | o<br>o | o<br>o | o<br>o | o<br>o | o<br>o | o<br>o | oo<br>ooo | o<br>oo | o<br>oo | o<br>o | o<br>o | o<br>o |
| | ຕູນ | <br>o | <br>o | <br>o | oo<br>o | o<br>oo | <br>o | <br>o | <br>o | <br>O | <br>o | <br>o | <br>o |
| | ອຶ້ນ | <br>o | <br>o | <br>o | <br>o | <br>o | <br>o | <br>o | o<br>o | o<br>o | <br>o | <br>o | <br>o |
| | ແລນ | | | | o | o | | | | | | | |
| | ນົກ | o | o | o | o<br>oo | o<br>ooo | o | o | o | O | o | o | o |
| | ໝູປ່າ | o<br>oo | o<br>o | o<br>o | o<br>o | o<br>o | o<br>o | o<br>o | oo<br>o | oo<br>o | o<br>ooo | o<br>ooo | o<br>ooo |
| | ໝາກປີ | o<br>o | oo<br>o | o<br>o | o<br>o | o<br>o | o<br>o | oo<br>o | oo<br>o | ooo<br>oo | o<br>ooo | o<br>oo | o<br>o |
| | ໝາກແຄ່ນ | | | | | | | | | ooo | o | | |
| | ເຈຍ | o | o | o | o | o | o | o | o | Oo | ooo | o | o |
| | ຈີນາຍ | | | o | o | o | o | o | oo | Oo | | | |
| | ແມງກອກ | | | | | | | | oo | Oo | | | |
| | ໄຄນ້ຳ | | oo | ooo | o | | | | | | | | |

໐ (ສີດຳ) ບ້ານຫວ້ຍເຫຼັກ ໐໐ ແມ່ນມີພໍກິນ

໐ (ສີແດງ) ບ້ານຫວ້ຍຮຸນນ້ອຍ ໐໐໐ ແມ່ນມີຫຼາຍເຫຼືອກິນຈິນໄດ້ຂາຍ

໐ ແມ່ນມີ ໜ້ອຍ

## 6. ຕາຕະລາງລາຍຮັບ













- ລາຍຮັບທີ່ສຳຄັນຂອງປະຊາຊົນ ບ້ານຫ້ວຍເຫຼັກແມ່ນໄດ້ມາຈາກການຂາຍເຄື່ອງປ່າຂອງດົງ ກວມ55% ຂອງລາຍຮັບທັງໝົດ.ແລະ ຮອງລົງມາແມ່ນໄດ້ຈາກການ ຂາຍສັດລ້ຽງ(ງົວ, ຄວາຍ ແລະ ໝູ )ກວມ24%
- ສຳລັບລາຍຮັບທີ່ໄດ້ຈາກເຄື່ອງປ່າຖ້າທຽບໃສ່ລາຍຮັບທັງໝົດຂອງບ້ານແລ້ວເຫັນວ່າມີຄວາມສຳຄັນຫຼາຍ ໂດຍສະເພາະແມ່ນຄັ່ງກວມ 62% ຂອງລາຍຮັບທີ່ໄດ້ຈາກເຄື່ອງປ່າຂອງດົງ.(ຄັ່ງປ່ອຍເອົາບໍ່ແມ່ນຄັ່ງເກັບ ຕາມທຳມະຊາດ ). ຮອງລົງມາແມ່ນປໍສາກວມ 13% ມີທັງປໍສາທີ່ເກີດຢູ່ພື້ນທີ່ຊາວກະສິກອນແລະ ປໍສາ ເອງທຳມະຊາດ.
- ລາຍຮັບທີ່ສຳຄັນຂອງປະຊາຊົນ ບ້ານຫ້ວຍຮຸນນ້ອຍແມ່ນໄດ້ມາຈາກການຂາຍເຄື່ອງປ່າຂອງດົງ ກວມ 42% ຂອງລາຍຮັບທັງໝົດ.ແລະ ຮອງລົງມາແມ່ນໄດ້ຈາກການ ຂາຍພືດກະສິກຳ( ໝາກງາ, ແກ່ນ ໝາກອຶ )ກວມ 33%

- ສຳລັບລາຍຮັບທີ່ໄດ້ຈາກເຄື່ອງປ່າຖ້າທຽບໃສ່ລາຍຮັບທັງໝົດຂອງບ້ານແລ້ວເຫັນວ່າມີຄວາມສຳຄັນຫຼາຍ ໂດຍສະເພາະແມ່ນໂຕແມ້, ແຂມ ກວມ31% ຂອງລາຍຮັບທີ່ໄດ້ຈາກເຄື່ອງປ່າຂອງດົງ( ເກັບຕາມທຳມະຊາດ) ຮອງລົງມາແມ່ນປົສາກວມ18%ມີທັງປົສາທີ່ເກີດຢູ່ພື້ນທີ່ຊາວກະສິກອນແລະປົສາເອງທຳມະຊາດ.

**ຕາຕະລາງ ລາຍຈ່າຍທີ່ສຳຄັນຂອງຄອບຄົວ**

| **ຊະນິດລາຍຈ່າຍ** | **ບ. ຫ້ວຍເຫຼັກ** | | **ບ. ຫ້ວຍຮຸນນ້ອຍ** | |
|---|---|---|---|---|
| | **ຈຳນວນເງິນ(ກີບ)** | **%** | **ຈຳນວນເງິນ(ກີບ)** | **%** |
| ເຂົ້າ | 84000000 | 23 | 40000000 | 39.9 |
| ອາຫານ | 73600000 | 20 | 11600000 | 11.6 |
| ເຄື່ອງນຸ່ງ | 92000000 | 26 | 17400000 | 17.4 |
| ຢາປົວພະຍາດ | 55200000 | 15 | 14500000 | 14.5 |
| ເຄື່ອງໃຊ້ສອຍ | 18400000 | 5 | 5800000 | 5.8 |
| ແນວພັນພືດ | 7500000 | 2 | | |
| ເສຍພາສີ | 10272000 | 3 | 4060000 | 4.0 |
| ເສຍຄ່າໄຟ້າ | | | 1100000 | 1.1 |
| ລາຍຈ່າຍອື່ນໆ(ຄ່ານ້ຳ,ຄ່າໄຟ,ບັດເຊີນ) | 18400000 | 5 | 5800000 | 5.8 |
| ລວມລາຍຈ່າຍ | 359372000 | 100 | 100260000 | 100 |

- ລາຍຈ່າຍຫຼັກຂອງທັງ 2 ບ້ານສ່ວນຫຼາຍແມ່ນ ຈ່າຍຊື້ເຂົ້າກິນ, ອາຫານ, ເຄື່ອງນຸ່ງຮົ່ມ ແລະ ຢາປົວພະຍາດ ແຕ່ລະຢ່າງແມ່ນຄວາມແຕກຕ່າງກັນເຊິ່ງສະແດງອອກຢູ່ໃນຕາຕະລາງຂ້າງເທິງ.

## 7. ການຄັດເລືອກຜະລິດຕະພັນເຄື່ອງຂອງດົງທີ່ສຳຄັນ

ເພື່ອຄັດເອົາຜະລິດຕະພັນທີ່ຈະເປັນບູລິມະສິດຂອງບ້ານທີ່ມີຄວາມອາດສາມາດສູງ. ພື່ອນຳໄປພັດທະນາໂດຍການຄັດເອົາປະເພດທີ່ 1 ແລະ 2 ຂອງກິນ,ຂາຍແລະ ຊົມໃຊ້ທີ່ຊາວບ້ານໄດ້ເລືອກມາແລ້ວໂດຍອີງຕາມເງື່ອນໄຂ ແລະ ມາດຖານ 4 ຢ່າງຄື:

1 ຄວາມຕ້ອງການຂອງຕະຫຼາດ

2 ຊັບພະຍາພະຍາກອນຂອງຜພລິດຕະພັນ

3 ນະໂຍບາຍ ແລະ ຮີດຄອງປະເພນີຕໍ່ກັບການເກັບກູ້

4 ເຕັກນິກການປຸງແຕ່ງ ແລະ ໄລຍະທາງແຕ່ບ້ານຫາບ່ອນມີຜະລິດຕະພັນ

.

ບ້ານ ຫ້ວຍຮຸນນ້ອຍ

| ຜະລິດຕະພັນ | ການຕະຫຼາດ | ຊັບພະຍາກອນ ແລະ ໄລຍະມາງ | ນະໂຍບາຍຮີດຄອງປະເພນີ ເສດຖະກິດ-ສັມຄົມ | ເຕັກນິກການເກັບກູ້ ແລະ ການປຸງແຕ່ງ |
|---|---|---|---|---|
| ໜໍ່ໄມ້ທົກ | ແມ່ນຫຼາຍຄືມີແມ່ນຄ້າມາເກັບຊື້ຢູ່ກັບບ້ານເປັນໜໍ່ແຫ້ງ ແຕ່ເປັນບາງເທື່ອເທົ່ານັ້ນ ແລະ ຂາຍ ເປັນໜໍ່ດິບຕາມບ້ານແມ່ນໜ້ອຍທີ່ສຸດເພາະສວນຫຼາຍຈະເກັບມາກິນ<br>ລາຄາຂາຍໜໍ່ແຫ້ງແມ່ນ1ກິໂລ/ 500ກີບ | 1. ໜໍ່ທົກຢູ່ປ່າແມ່ນມີຫຼາຍຖ້າທຽບກັບຈຳນວນເອົາອອກຈາກປ່າມາຂາຍ,ກິນ 2 ໂຕເລກແຕ່ລະປີທີ່ປະຊາຊົນເອົາໜໍ່ອອກຈາກປ່າແມ່ນບໍ່ຄືກັນແຕ່ສະເພາະປີ 2007ແມ່ນ10ໂຕ່ນ.<br>3. ນັບແຕ່ບ້ານໄປຫາປ່າໜໍ່ແມ່ນໃຊ້ ເວລາຢູ່ 3 ຊົ່ວໂມງ<br>4. ລະດູການເກັບກູ້ແມ່ນເດືອນ6-8 | 1. ທາງຂັ້ນເທິງແມ່ນບໍ່ມີການຫ້ວງຫ້າມ, ໜໍ່ທົກທຸກຄົນສາມາດເກັບໄດ້ບໍ່ວ່າຍິງ, ຊາຍ ແລະ ເດັກນ້ອຍ.<br>2. ມີຄວາມສຳຄັນຫຼາຍຕໍ່ຄອບຄົວທີ່ຂາດກິນ, ໄດ້ລາຍຮັບເຖິງ9%ຂອງລາຍຮັບທັງໝົດຂອງຄອບຄົວ<br>3. ປະຊາຊົນພາຍໃນບ້ານ ໄປເກັບປະມານ 95%<br>4.ລາຍຮັບທັງໝົດຂອງບ້ານ 2.1%ໄດ້ຈາກການຂາຍໜໍ່ | 1. ຖ້າເປັນໜໍ່ສັ້ນແມ່ນໃຊ້ສຽມຂຸດ. ແຕ່ຖ້າເປັນໜໍ່ຍາວແມ່ນໃຊ້ພ້າຕັດແລ້ວໃສ່ຖົງຫຼືເປົາເປັນມາເຮືອນ<br>2. ຂາຍດິບ, ຕົ້ມເຮັດເປັນມັດຂາຍ, ເຮັດໜໍ່ສົ້ມ ແລະ ເຮັດໜໍ່ຖົງ, ໜໍ່ແຫ້ງໄວ້ຂາຍ ແລະ ກິນຍາມໜໍ່ບໍ່ມີ ເຊັ່ນ:ໃນຊ່ວງເດືອນ 12, 1 ແລະ 2 |
| ປາ | ແມ່ນບໍ່ມີຜູ້ມາເກັບຊື້ ສວນຫຼາຍມີແຕ່ຫາມາກິນພາຍໃນຄອບຄົວ | 1. ປາຢູ່ໃນນ້ຳບໍ່ມີຫຼາຍເອົາມາກິນກໍ່ໜ້ອຍ,ຍ້ອນມັນຫາຍາກ ແລະ ຄົນກິນຫາຫຼາຍ<br>2. ການໄປຫາປາແມ່ນໃຊ້ເວລາຢູ່ 30 ນາທີ,ນັບແຕ່ອອກຈາກບ້ານຫາທ່ານ້ຳ | 1. ແມ່ນບໍ່ມີການຫ້ວງຫ້າມຖ້າເກັບກູ້ແບບທຳມະຊາດ. ຫ້າມໃຊ້ ລະເບີດ ຫຼື ຢາເບື່ອ ,ຍິງ,ຊາຍ ແລະ ເດັກນ້ອຍ ຫາ ໄດ້.<br>2. ຈນຫາປາຈະເປັນຜູ້ຊາຍຫຼາຍກວ່າ 80% | 1. ຕາມປົກກະຕິແລ້ວຊາວບ້ານແມ່ນໃຊ້ ແຫ,ມອງ, ໃຊ້ເບັດປັກ ແລະ ໃຊ້ຫວິງສ້ອນເອົາ.<br>2. ເຮັດແກງ,ລາບ,ກ້ອຍ, ເອາະ, ປີ້ງ |
| ປູຫີນ | ແມ່ນມີຄວາມຕ້ອງການຫຼາຍເພາະ ຄົນນິຍົມກິນໂດຍສະເພາະ ແມ່ນ ແມ່ຄ້າທາງໝອງຊຽວມາເກັບຊື້ | 1. ແມ່ນມີໝອັຍບໍ່ພໍກັບຄວາມຕ້ອງການຂອງຕະຫຼາດເພາະປູ ຢູ່ປ່າມີສັດປ່າກິນ(ໝູ, ປ່າ)<br>2. ອອກຈາກບ້ານໄປຫາບ່ອນເອົາປູໃຊ້ເວລາຢູ່ 4 ຊົ່ວໂມງ<br>3. ປູ ແມ່ນມີຕະຫຼອດປີແຕ່ມີຫຼາຍແມ່ນເດືອນ 8-9 | 1. ການຫາປູ ທາງຂັ້ນເທິງແມ່ນບໍ່ມີການຫ້ວງຫ້າມ ແລະ ທຸກຄົນສາມາດເກັບກູ້ໄດ້ບໍ່ວ່າຍິງ,ຊາຍ ຫຼື ເດັກນ້ອຍ | 1. ແມ່ນໃຊ້ສຽມຂຸດ, ບາງເທື່ອກໍ່ໃຊ້ມີແງະຕາມເງີບຫີນການຂາຍແມ່ນຂາຍເປັນໂຕດິບ, ໜຶ້ງເປັນໂຕຂາຍ<br>2.ປູຫີນສວນຫຼາຍປະຊາຊົນມັກເອົາເຮັດມຸກໃສ່ຊີ້ນໝູ |
| ແຂມ | ແມ່ນມີຫຼາຍຄື:ມີແມ່ຄ້າໝອງຊຽວເປັນຜູ້ປະມູນເກັບຊື້ຢູ່ກັບບ້ານ ລາຄາ1 ກິໂລ ຕໍ່ 3000ກີບ | 1. ແມ່ນ ມີຫຼາຍແຕ່ບາງປີເທື່ອກໍ່ບໍ່ພໍກັບຄວາມຕ້ອງການຂອງຕະຫຼາດຍ້ອນວ່າແຂມມີໄລຍະຂອງການເກັບກູ້ແມ່ນສັ້ນ.<br>2. ໃນປີ2007ແມ່ນເກັບກູ້ຂາຍ 10 ໂຕນ ແລະ<br>3 ໄລຍະທາງຂອງການໄປ | 1. ການເກັບກູ້ແຂມທາງຂັ້ນເທິງແມ່ນຫ້ວງຫ້າມຮີດຄອງປະເພນີຍິງ, ຊາຍເກັບ ແລະ ເດັກນ້ອຍເກັບໄດ້<br>2.ລາຍຮັບທັງໝົດຂອງບ້ານ 12.8%ແມ່ນໄດ້ຈາການຂາຍແຂມ<br>3. ຄອບຄົວຂາດກິນມີລາຍ | ແມ່ນ ໃຊ້ພ້າຂໍຕັດເອົາ ແລະ ບາງເທື່ອກໍ່ໃຊ້ກັຽວໆເອົາແຂມຫຼັງຈາກຕັດອອກຈາກປ່າແລ້ວຕ້ອງໄດ້ຕາກແດດ, ຖ້າແດດກ້າດີໃຊ້ເວລາຕາກແມ່ນ 3 ຊົ່ວໂມງ ນອກຈາກຕາກແດດປະຊາຊົນຍັງເຄີຍໃຊ້ໄຟລົນກໍລະນີບໍ່ມີ |

| | | | | |
|---|---|---|---|---|
| | | ເອົາແຂມແມ່ນ 3 ຊົ່ວໂມງ<br>4.ໃນຊ່ວງລະດູການເກັບກູ້ແຂມແມ່ນເດືອນ 1-3 | ໄດ້ຈາກແຂມແມ່ນ11.2% ຂອງລາຍຮັບທັງໝົດ<br>4. ການເກັບແຂມຍິງ ແລະ ຊາຍແມ່ນເທົ່າກັນ | ແດດ |
| ປໍສາ | ກໍ່ຄືກັບແຂມແມ່ນມີ ບໍລິສັດມາປະມູນເກັບຊື້ລາຄາ1 ກິໂລ/ 3500ກີບ | 1. ກໍ່ມີຫຼາຍແຕ່ບໍ່ພຽງພໍກັບຄວາມຕ້ອງການຂອງແມ່ຄ້າ ເພາະ ວ່າຊ່ວງລະດູການເກັບກູ້ແມ່ນຖືກກັບຊ່ວງທຳການຜະລິດ<br>2. ໃນປີນີ້ປະຊາຊົນຂາຍແມ່ນ 5ໂຕນ<br>3. ໄລຍະທາງແມ່ນໃຊ້ເວລາຢູ່ 2-4 ຊົ່ວໂມງ | 1. ແມ່ນບໍ່ມີການຫ້ວງຫ້າມຮີດຄອງປະເພນີຍິງ, ຊາຍ ແລະ ເດັກນ້ອຍສາມາດເອົາໄດ້<br>2.ລາຍຮັບທັງໝົດຂອງບ້ານແມ່ນ 7% ໄດ້ຈາກການຂາຍປໍສາ<br>3. ຄອບຄົວຂາດກິນມີລາຍຮັບເຖິງ 6.7%<br>4. ການເກັບແຂມຍິງ ແລະ ຊາຍແມ່ນເທົ່າກັນ | 1. ແມ່ນໃຊ້ພ້າ ແລ້ວລອກເປືອກອອກ, ການລອກເປືອກແມ່ນມີ 2 ຄັ້ງຄື:<br>2. ແມ່ນລອກເປືອກອອກຈາກແກ່ນ 2 ລອກເປືອກສີຂຽວບາງໆອອກຈາກເສັ້ນສາພາຍຫຼັງເປືອກຂຽວອອກແລ້ວຕາກແດດ ຖ້າແດດກ້າດີແມ່ນໃຊ້ເວລາເຄິ່ງມື້, ຖ້າແດດບໍ່ກ້າແມ່ນຕາກແດດໝົກມື້ ແລ້ວມັດ |
| ເປືອກເມືອກ | ແມ່ນມີຄວາມຕ້ອງການຫຼາຍ, ເມືອກກໍ່ຄືກັບເຄື່ອງປ່າຂອງດົງຊະນິດອື່ນໆຄືມີແມ່ນຄ້າຢູ່ໜອງຂຽວມາເກັບຊື້. ລາຕາແມ່ນ 1ກິໂລ/ 5000ກີບ | 1. ເມືອກແມ່ນມີໜ້ອຍບໍ່ພຽງພໍກັບຄວາມຕ້ອງການຂອງຕະຫຼາດ<br>2. ປະຊາຊົນຂາຍ1 ໂຕ່ນ<br>3. ໄລຍະທາງໄປເກັບແມ່ນ 2-4ຊົ່ວໂມງນັບແຕ່ບ້ານທາບ່ອນມີເມືອກ | 1. ແມ່ນບໍ່ມີການຫ້ວງຫ້າມແຕ່ມີຂໍ້ຫ້ວງຫ້າມບາງກໍລະນີຄື: ຫ້າມຂຸດເອົາຮາກ ແລະຍິງ,ຊາຍ, ເດັກນ້ອຍແມ່ນສາມາດເກັບໄດ້<br>2. ປະຊາຊົນໄປເກັບແມ່ນໝົດບ້ານ<br>3. ຜູ້ຊາຍມີສ່ວນຜຮ່ວມ 60%<br>4. ຄອບຄົວທີ່ໄດ້ຮັບຜົນປະໂຫຍດສູງສຸດແມ່ນຄອບຄົວຂາດກິນມີລາຍຮັບເຖິງ 6.7%ຂອງລາຍທັງໝົດຂອງຄອບຄົວ | 1. ແມ່ນໃຊ້ພ້າຕັດເຄືອ, ໃຊ້ສຽມຂຸດຮາກຕັດເປັນທ່ອນຍາວປະມານ1ແມັດໃສ່ເປົ້າເອົາໄມ້ທັບເອົາແຕ່ເປືອກ, ແກ່ນບໍ່ເອົາ<br>2. ແລ້ວຕາກແດດປະມານ 1ມື້ຖ້າແດດກ້າ, ຖ້າແດດບໍ່ກ້າແມ່ນ 2-3ມື້ |

| | | | | |
|---|---|---|---|---|
| ຄັ່ງ(ປ່ອຍ) | ທີ່ຜ່ານມາແມ່ນມີຫຼາຍ ມີທັງພໍ່ຄ້າໝອງຊຽວ ແລະ ພໍ່ຄ້າຈີນມາ ຊອກເກັບຊື້.<br>ລາຄາແມ່ນ 13.000ກີບຕໍ່ກິໂລ | 1. ປະຈຸບັນແມ່ນມີໜ້ອຍບໍ່ພຽງພໍກັບຄວາມຕ້ອງຂອງຕະຫຼາດແຕ່ຕໍ່ໄປຈະມີຫຼາຍຍ້ອນປະຊາຊົນນິຍົມກັນປ່ອຍຫຼາຍປະຈຸບັນເນື້ອປ່ອຍຄັ່ງມີ 7ເຮັກຕາ<br>2. ປະຊາຊົນເກັບຂາຍມີ 600ກິໂລ/ປີ<br>3 ຄັ່ງປີ1 ເກັບໄດ້2 ເທື່ອຄື ເດືອນ5 ແລະ ເດືອນ11<br>4. ໄລຍະທາງຢູ່ 1-2ຊົ່ວໂມງ | 1. ແມ່ນບໍ່ມີການຫ້ວງຫ້າມຮີດຄອງປະເພນີແມ່ນສາມາດປູກ ແລະ ເກັບໄດ້ ທຸກຄົນ<br>2. ປະຈຸບັນຜູ້ທີ່ມີລາຍຮັບຈາກຄັ່ງມີແຕ່ຄອບຄົວຮັ່ງມີຍ້ອນເຂົາເຈົ້າມີດິນປູກມີລາຍຮັບເຖິງ 5.7% ສຳລັບຄອບຄົວຂາດກິນແມ່ນບໍ່ມີຍ້ອນບໍ່ມີດິນ ປູກ<br>3.ລາຍຮັບທັງໝົດຂອງບ້ານຄັ່ງມີຢູ່3.33%ຂອງລາຍຮັບ | 1.ຄັ່ງທີ່ຈະເກັບອາຍຸຕ້ອງໄດ້ 6 ເດືອນປີ , ການເກັບແມ່ນອີງຕາມຄັ່ງຖ້າຄັ່ງຍາວຮອດໃຊ້ແມ່ນຕັດຮອດເອົາຫັ້ນ<br>2. ການປຸ່ງແຕ່ງກ່ອນຈະຂາຍແມ່ນມີ2 ແບບຄື:<br>*ຄັ່ງແນວພັນ ແມ່ນຕັດທ່ອນຍາວ 20 ຊມຫ້າມໃສ່ເປົ້າມັນຮ້ອນແມ່ຄັ່ງຈະໄຕ່ອອກ<br>*ຄັ່ງແຫ້ງທີ່ຈະເອົາໄປນຳໃຊ້ ແມ່ນແກະອອກຈາກໄມ້ ແລ້ວຕາກແດດ2-3ມື້ |
| ໂຕແມ້ | ແມ່ນມີຄວາມຕ້ອງການຫຼາຍມີແມ່ນ\ຄ້າມາຊອກຊື້ຢູ່ກັບບ້ານ ລາຄາ50.000ກີບ/ໂລ | 1. ແມ່ນມີໜ້ອຍຍ້ອນວ່າອີງລະດູການຖ້າມີໃດຝົນຕົກຫຼາຍເຮັດໃຫ້ໜໍ່ມີນ້ຳຫຼາຍຈະບໍ່ເກີດມີໂຕແມ້<br>2. ປະຊົນເກັບມາຂາຍ 600ກິໂລ/ ປີ<br>3. ໄລຍະທາງ ແມ່ນ 5-6 ຊົ່ວໂມງ | 1. ແມ່ນບໍ່ມີການຫ້ວງຫ້າມຮີດຄອງປະເພນີແມ່ນສາມາດເກັບໄດ້ທຸກຄົນ<br>2.ລາຍຮັບທັງໝົດຂອງບ້ານ 12.8% ແມ່ນໄດ້ຈາກການຂາຍໂຕແມ້<br>3.ຄອບຄົວທີ່ມີລາຍຮັບຈາກໂຕແມ້ ແມ່ນຄອບຄົວຂາດກິນມີລາຍຮັບເຖິງ 3.4% | 1. ແມ່ນໃຊ້ຜ້າຕັດເອົາລຳ, ໜໍ່ທີ່ມີໂຕແມ້ຢູ່ ແລ້ວເຄາະເອົາແຕ່ໂຕແມ້ ອຸປະກອນທີ່ໃສໂຕແມ້ຕ້ອງແມ່ນບັ້ງໄມ້.ເພື່ອບໍ່ໃຫ້ໂຕແມ້ຕາຍ, ໂຕ ແມ້ແມ່ນຂາຍເປັນໂຕດິບ<br>2. ໂຕແມ້ຄົນນິຍົມເຮັດຂົ້ວກິນກັບເຂົ້າ. ບາງເທື່ອກໍ່ຕີປົນກັບໄຂ່ແລ້ວຈື້ນ. |
| ໄມ້ເຮ້ຍ | ແມ່ນບໍ່ໄດ້ຂ່ຍສ່ວນຫຼາຍແມ່ນເກັບກູ້ມານຳໃຊ້ພາຍຄົວເຮືອນ | 1. ສວນຊັບພະຍາກອນ ແມ່ນມີຫຼາຍຍ້ອນວ່າໄມ້ເຮ້ຍມັນມີການ ຂະຫຍາຍໄວກ່ວາໄມ້ປ່ອງຊະນິດອື້ນໆ ແລະ ໜໍ່ຂອງມັນຄົນກໍ່ບໍ່ນິມກິນ, ມີການໃຊ້ງານໄດ້ຢ່າງຕ່ຳ 1-2 ປີ<br>2. ໃຊ້ ເວລາອອກຈາກໄປ ຫາ ປ່າໄມ້ ເຮ້ຍແມ່ນ 30 ນາທີ | 1.ການເກັບກູ້ພັກລັດແມ່ນບໍ່ໄດ້ຫ້ວງຫ້າມຮີດຄອງປະເພນີຍິງ,ຊາຍແມ່ນເກັບໄດ້<br>2. ປະຊາຊົນທີ່ເຂົ້າຮ່ວມຕັດໄມ້ແມ່ນຜູ້ຊາຍ 80%<br>3. ຄອບຄົວທີ່ນຳໃຊ້ຫຼາຍແມ່ນຄອບຄົວທຸກຈົນ, | 1. ແມ່ນໃຊ້ຜ້າຕັດເປັນລຳແລ້ວລິງກິ່ງ, ງາ, ແລະ ໃບອອກ, ໄມ້ທີ່ນຳມາໃຊ້ສ່ວນຫຼາຍແມ່ນມີອາຍຸ 2ປີ, ມັນຈິ່ງໝັ້ນ ແລະ ມີການນຳໃຊ້ງານຫຼາຍ ປີ<br>2. ສວນແມ່ນຊັບເຮັດຟາກຸ້ງເຮືອນ, ແອມຝາເຮືອນ ເຮັດຄອງເປັດ,ໄກ່. ແລະ ນຳມາຈັກຕ໋ອກເພື່ອ ສ້ານຫວດ, ກະລາ |
| ໄມ້ຈິງ(ປຸກສ້າງ) | ແມ່ນບໍ່ມີຫຼາຍເພາະຂາຍໃຫ້ແຕ່ຄົນຢູ່ພາຍໃນບ້ານເພື່ອເອົາມາປຸກເຮືອນເທົ່ານັ້ນ | 1. ຊັບພະຍາກອນແມ່ນມີຫຼາຍ. ຍ້ອນວ່າບ້ານມຂໍ້ຫ້າມບໍ່ໃຫ້ຕັດຂາຍ, ມີແຕ່ເອົາມານຳໃຊ້ໄດ້<br>2. ອອກຈາກບ້ານຫາປ່າ | 1. ແມ່ນມີການຫ້ວງຫ້າມ<br>2. ຜູ້ທີ່ໄປເອົາໄມ້ແມ່ນຜູ້ຊາຍ 95%<br>3. ການໃຊ້ຢູ່ພາຍໃນບ້ານແມ່ນ80% | 1. ການເກັບກູ້ແມ່ນໃຊ້ຜ້າຕັດ, ເລື້ອຍປາດ ເປັນຕົ້ນ ຫຼື ເປັນທ່ອນແລ້ວແຕ່ຄວາມຕ້ອງການຈະນຳໃຊ້<br>2. ເອົາມາເຮັດເປັນໄມ້ຄຳ |

| | | | | |
|---|---|---|---|---|
| | | ບ່ອນ ທີ່ ມີໄມ້ຈິງ ແມ່ນ<br>1 ຊົ່ວໂມງ | | ແບບ,ໄມ້ຄີ ໄມ້ກ້ອນ ແລະ ບາງເຮືອນກໍ່ເອົາເຮັດເສົາເຮືອນກໍ່ມີ |
| ໄມ້ຟືນ | ສະເພາະຢູ່ບ້ານນີ້ຟືນແມ່ນບໍ່ໄດ້ຂາຍມີແຕ່ເອົາມາດັງພາຍໃນຄົວເຮືອນເທົ່ານັ້ນ | 1. ແມ່ນມີຫຼາຍຍ້ອນມີການຖາງປ່າເຮັດໄຮ່ແລະ ມັນຕາຍເອງ ກໍ່ມີ<br>2. ໃຊ້ເວລາຢູ່ 30 ນາທີ | 1.ຖ້າເປັນຟືນໄມ້ຕາຍຢູ່ກາງໄຮ່ ແມ່ນບໍ່ຫ້ອງຫ້າມ,<br>ແຕ່ຖ້າເປັນໄມ້ຢືນຕົ້ນຢູ່ປ່າແມ່ນຫ້ອງຫ້າມ, ຍິງ,ຊາຍສາມາດເອົາໄດ້<br>2. ການໃຊ້ຟືນຢູ່ໃນບ້ານແມ່ນ100%<br>3. ຟືນແມ່ນມີຄວາມສຳຄັນກັບທຸກໆລະດັບຄອບຄົວ | 1. ແມ່ນໃຊ້ຜ້າຕັດ, ເລື້ອຍປາດ ເປັນທ່ອນຫຼື ເປັນດົ້ນ<br>2. ໃຊ້ຜ້າ ຫຼື ຂວນຜ່າເປັນດົ້ນນ້ອຍເພື່ອສະດວກໃນການດັງ |

<u>ບ້ານ ຫ້ວຍເຫຼັກ</u>

| ຜະລິດຕະພັນ | ການຕະຫຼາດ | ຊັບພະຍາກອນ<br>ແລ ະໄລຍະທາງ | ນະໂຍບາຍ,<br>ຮີດຄອງປະເພນີ | ວິທີການເກັບກູ້<br>ແລະ ການປຸງແຕ່ງ |
|---|---|---|---|---|
| ປາ | 1 ແມ່ນບໍ່ໄດ້ຂາຍຫຼາຍ. ສ່ວນຫຼາຍມີແຕ່ຫາມາກິນເທົ່ານັ້ນ | 1 ກໍ່ມີ ໜ້ອຍຍ້ອນຄົນຫາກິນຫຼາຍ, ປາສາມາດຫາໄດ້ຕະຫຼອດປີ<br>2 ອອກຈາກບ້ານຫາທ່ານ້ຳແມ່ນໃຊ້ເວລາຢູ່ 30 ນາທີ | 1 ບໍ່ມີການ ຫ້ອງຫ້າມຖ້າຫາແບບຕາມ ທຳມະຊາດ. ຫ້າມບໍ່ໃຫ້ຖິ້ມລະເບີດ ຫຼື ໃຊ້ຢາເບືອຍິງ, ຊາຍແມ່ນຫາໄດ້ | 1ແມ່ນໃຊ້ແຫ້,ມອງແລະ ສ້ອນ<br>2 ປີ້ງ, ແກ້ງ, ເອາະ |
| ກຸ້ງ | 1. ແມ່ນ ຕ້ອງການຫຼາຍໄດ້ຂາຍຢູ່ກັບບ້ານແມ່ຄ້າທີ່ມາເກັບຊື້ແມ່ນມາຈາກໝອງຊຽວ ແລະ ພວກ ຮ້ານອາຫານ<br>2.ລາຄາ1ກິໂລ/ 40.000 | 1. ແມ່ນ ມີຫຼາຍແຕ່ຕ້ອງອີງ<br>ຕາມລະດູການ<br>2. ແມ່ນໃຊ້ເວລາ30 ນາທີ<br>3. ຊ່ວງທີ່ມີກຸ້ງເດືອນ 7-9 | 1 ແມ່ນບໍ່ມີການຫ້ອງຫ້າມ. ຍິງ,ຊາຍ ເກັບໄດ້ ຜູ້ເກັບຊື້ຕ້ອງມີ ໃບເກັບຊື້ມາແຕ່ຂັ້ນເມືອງ | 1 ແມ່ນໃຊ້ໄຊ ແລະ ສ້ອນ<br>2 ຂາຍເປັນໂຕດິບ, ຂາຍເປັນກິໂລ, ກຸ້ງເຮັດກິນໄດ້ຫຼາຍຢ່າງເຊັ່ນ: ຈຶ້ນ, ເອາະ, ຕົ້ມຍຳ |
| ໜໍ່ຂີມ | 1 ແມ່ນ ມີຄວາມຕ້ອງການຫຼາຍຄືມີແມ່ຄ້າມາຊອກຊື້ຢູ່ກັບບ້ານແຕ່ຊາວບ້ານບໍ່ມີໜໍ່ຂາຍ. | 1. ແມ່ນມີໜ້ອຍບ້ອນການຖາງປ່າເຮັດໄຮ່. ເປັນຂີຕາຍ<br>2.ໃຊ້ເວລາຢູ່ 1.30 ຊົ່ວໂມງ<br>3. ລະດູການເກັບກູ້ 3-5 | 1 ເລື່ອງການເກັບກູ້ແມ່ນບໍ່ມີການຫ້ອງຫ້າມ. ຍິງ,ຊາຍເກັບໄດ້<br>2. ຜູ້ທີ່ໄປເອົາໜໍ່ຍິງ70% | 1 ແມ່ນໃຊ້ແວກ, ສ້ຽມຊຸດ ແລະ ໃຊ້ຜ້າຕັດ<br>2 ໜໍ່ຂີມແມ່ນນິຍົມເຮັດແກງ, ຕົ້ມກັບຂອງກິນ |
| ປໍສາ | 1. ແມ່ນ ມີຄວາມຕ້ອງການຫຼາຍມີພໍ່ຄ້າເຂົ້າມາເກັບຊື້ຢູ່ກັບບ້ານ<br><br>2. ລາຄາຂາຍ1 ກິໂລຕໍ່ 3000ກີບ | 1.ມີ ຫຼາຍແຕ່ບໍ່ຕະຫຼອດປີມີມີເປັນຊ່ວງລະດູການ<br>2. ປະຊີນເກັບ 10 ໂຕ່ນ<br>3. ອອກຈາກບ້ານຫາບ່ອນມີສາແມ່ນຂຶ້ນກັບແຕ່ລະພື້ນທີ່ແຕ່ມີຫຼາຍ ແລະ ປະຊາຊົນມັກໄປແມ່ນ ໃຊ້ເວລາຢູ່ | 1. ແມ່ນບໍ່ໄດ້ມີການຫ້ອງຫ້າມ ແລະ ຍິງ, ຊາຍເດັກນ້ອຍສາມາດເກັບໄດ້<br>2.ລາຍຮັບທັງໝົດຂອງບ້ານ 11.9%ແມ່ນໄດ້ຈາກການຂາຍປໍສາ<br>3. ປະຊາຊົນທີ່ໄປເກັບມີ | 1. ໃຊ້ຜ້າຕັດຕົ້ນລົງແລ້ວລອກສາຈາກແກ່ນແລ້ວໃສ່ເປົ້າຫຼືມັດເຮັດເປັນຫາບຄືກັບຫາບຟືນ,ຫາບມາບ້ານ<br>2. ກ່ອນຈະຂາຍແມ່ນຕ້ອງລອກເປືອກສີຂຽວບາງໆອອກໃຫ້ໝົດແລ້ວຕາກແດດໃຫ້ |

| | | | | |
|---|---|---|---|---|
| | | 1 ຊົ່ວ ໂມງ.<br>4. ລະການເກັບກູ້ແມ່ນມີ 2 ຊ່ວງຄື: ເດືອນ 3-4 ແລະ ເດືອນ 10-11 | 90%<br>4. ຄອບຄົວທຸກຈົນມີລາຍ ຮັບຈາກການຂາຍປໍສາ ແມ່ນ10.5%ຂອງລາຍຮັບ ທັງໝົດ | ແຫ້ງດີຖ້າແດດ ກ້າດີ. ຕາກ ມື້ 1 ກໍ່ໄດ້. |
| ແຂມ | 1. ແມ່ນກໍ່ຄືກັບປໍສາມີພໍ່ ຄ້າເຂົ້າມາເກັບຊື້ຢູ່ ກັບ ບ້ານ<br>2. ລາຄາ1 ກິໂລດ່3000 | 1.ແມ່ນມີຫຼາຍແຕ່ອີງຕາມ ລະດູການຄື: ເດືອນ 1-3 ບາງປີ ກໍ່ບໍ່ພໍ ກັບຄວາມ ຕ້ອງການຂອງຕະຫຼາດ ຍ້ອນຊ່ວງລະດູການມັນສັ້ນ ເກັບບໍ່ທັນກໍ່ແກ້ກ່ອນ<br>2. ປະຊາຊົນເກັບມາຂາຍ 9ໂຕ່ນ<br>3. ການໄປເອົາແຂມແຕ່ ບ້ານຫາປ່າແຂມໃຊ້ເວລາ 30ນາທີ ຫາ 1 ຊົ່ວໂມງ<br>4. ລະການເກັບກູ້ແມ່ນ ເດືອນ1-3 | 1. ແມ່ນບໍ່ມີການຫ້ວງຫ້າມ ໃນກໍລະນີເກີດເອງຕາມທຳ ມະຊາດ, ຫ້ວງຫ້າມໃນເມື່ອ ເກີດຢູ່ໃນບໍລິເວນພື້ນທີ່ຂອງ ບຸກຄົນ,ຮີດຄອງປະເພນີ ຍິງ, ຊາຍແມ່ນເກັບໄດ້<br>2 ລາຍຮັບທັງໝົດຂອງບ້ານ 10.7%ແມ່ນໄດ້ຈາກການ ຂາຍແຂມ<br>3. ປະຊາຊົນທີ່ໄປເກັບມີ 90%<br>4. ຄອບຄົວທຸກຈົນລາຍຮັບ ຈາກການຂາຍສາຍແມ່ນ 12.3% | 1. ແມ່ນໃຊ້ຜ້າຂໍເກາະແລ້ວ ຕັດເອົາອຸປະກອນທີ່ໃສ່ ແມ່ນກະແຢ້ ຫຼື ໃຊ້ເຊືອມັດ ແມ່ນຕາກແດດໃຫ້ດອກຫ້າວ ແລ້ວຟາດເອົາດອກອອກລີງ ກີ່ງງາເຮັດຕາມແມ່ຄ້າສັ່ງ ບາງເທື່ອບໍ່ມີແດດຕາກແມ່ນ ໃຊ້ໄຟລົນ. ການໃຊ້ໄຟລົນ ແມ່ນໄດ້ນ້ຳໜັກດີກ່ວາຕາກ ແດດແຕ່ເກັບໄວ້ດົນບໍ່ໄດ້ |
| ໄມ້ຟື້ນ | ແມ່ນບໍ່ຕ້ອງການມີແຕ່ ເອົາມາດັງພາຍໃນຄົວ ເຮືອນເທົ່ານັ້ນ | 1. ກໍ່ມີໜ້ອຍຍ້ອນມີນະໂຍ ບາຍໃຫ້ຍຸດຕິການຖາງປ່າ ໄມ້ໃຫຍ່ເພື່ອເຮັດໄຮ່ ແມ່ນ ຂື້ນກັບແຕ່ລະພື້ນທີ່ໄຮ່ຂອງ ແຕ່ລະຄົນແຕ່ ສວນໃຫຍ່ ແມ່ນໃຊ້ເວລາ ຢູ່ 30 ນາທີ | 1. ແມ່ນບໍ່ມີການຫ້ວງຫ້າມ ເພາະເປັນຟື້ນໄມ້ຕາຍຍີງ, ຊາຍ ສາມາດເອົາໄດ້ | 1.ໃຊ້ ຜ້າຕັດ ຫຼື ເລື້ອຍປາດ ເປັນທ່ອນ,ກ່ອນຈະດັງຕ້ອງໄດ້ ຜ່າເປັນດິ້ນກ່ອນ. ອຸປະກອນ ທີ່ໃຊ້ແມ່ນຜ້າ, ຂວນ |
| ໄມ້ຈິງ<br>ໄມ້ປຸກສ້າງ | 1 ແມ່ນມີຄວາມຕ້ອງ ການຫຼາຍແຕ່ທາງບ້ານມີ ຂໍກຳນົດຫ້າມຕັດຂາຍມີ ແຕ່ເອົາມານຳໃຊ້ໄດ້ | 1 ແມ່ນມີໜ້ອຍຍ້ອນມີ ການຖາງປ່າເຮັດໄຮ່ຢູ່<br>2 ຍ່າງແຕ່ບ້ານຫາປ່າທີ່ມີ ຈີງແມ່ນໃຊ້ເວລາຢູ່ 30 ນາທີ ຫາ1 ຊົ່ວໂມງ | ແມ່ນມີການຫ້ວງຫ້າມ ຍ້ອນມີ ການຮັກສາປ່າ ໄມ້, ສະພາບແວດລ້ອມ ແລະ ຕົ້ນນ້ຳ ລຳທານ | ແມ່ນໃຊ້ຜ້າ,ຂວານ ແລະ ເລື້ອຍຕັດຕົ້ນລົງຕັດເປັນຕອນ, ເລື້ອຍເຮັດເປັນແປຮູບເພື່ອນຳ ໃຊ້ປຸກສ້າງເຮືອນ ແລະ ຂາຍ |
| ໄມ້ເຮ້ຍ | ບໍ່ຕ້ອງການມີແຕ່ເອົາມາ ໃຊ້ພາຍໃນຄົວເຮືອນ | 1 ກໍ່ມີ ໜ້ອຍພໍແຕ່ນຳມາ ຊົມໃຊ້<br>2 ຍ່າງແຕ່ ບ້ານຫາປ່າໄມ້ ແຮ້ແມ່ນໃຊ້ເວລາຢູ່ 30 ນາທີ | 1 ການເກັບກູ້ທາງຂັ້ນກໍ່ບໍ່ມີ ການຫ້ວງຫ້າມ, ຮີດຄອງປະ ເພນີ ຍິງ,ຊາຍແມ່ນສາ ມາດເອົາໄດ້<br>2 ຄອບຄົວທີ່ນຳໃຊ້ຫຼາຍ ກ່ວາໝູ່ແມ່ນຄອບຄົວທຸກ ຈົນ | ແມ່ນໃຊ້ຜ້າຕັດລຳລົງແລ້ວກີ່ງ ງາອອກເພື່ອນຳມາ ຈັກຕອກ ເພື່ອສານແອບເຂົ້າ,ຫວດ ແລະ ເຮັດຍູ ກວດ |
| ໝາກຕາວ | 1 ແມ່ນມີໜ້ອຍບໍ່ຄ່ອຍມີ | 1ມີໜ້ອຍແລະມີ ເປັນຊວ່ງ | 1 ບໍ່ຫ້າມໃນການເກັບກູ້ | ແມ່ນຂຶ້ນຕົ້ນແລ້ວໃຊ້ ຜ້າຕັດ |

| | | | | |
|---|---|---|---|---|
| | ຜູ້ມາຊອກເກັບຊື້<br>2 ລາຄາ2000ກີບຕໍ່ກິໂລ | ລະດູການຄື:ເດືອນ 11-12<br>2 ອອກຈາກບ້ານໄປຫາປ່າ ຕາວໃຊ້ເວລາຍ່າງ1 ຊົ່ວໂມງ | ໝາກແຕ່ຫ້າມບໍ່ໃຫ້ ຕັດເອົາ ຍອດມາກິນແລະ ຕັດຕົ້ນ ເວລາເກັບເອົາໝາກຂອງ ມັນຮີດຄອງປະເພນີຍິງ, ຊາຍແມ່ນ ສາມາດເອົາໄດ້<br>2 ລາຍຮັບຂອງບ້ານ 0.2% ໄດ້ຈາກການຂາຍໝາກ ຕາວ<br>3 ປະຊິນມີສ່ວນຮ່ວມ31% ໃນການເກັບຕາວຂາຍ<br>4 ຜູ້ທີ່ເກັບໝາກຕາວແມ່ນ ຜູ້ຊາຍ90%<br>ຄອບຄົວທຸກຈົນມີລາຍ ຮັບຈາກການຂາຍຕາວ ແມ່ນ5.3% ຂອງລາຍຮັບ ທັງໝົດຂອງຄອບຄົວ | ເອົາແຊງທີ່ມີ ໝາກແກ່ລົງ ໂດຍມີການຍາມເບິ່ງໝາກ1 ກ່ອນວ່າໝາກແກ່ແລ້ວບໍ ຈຶ່ງຕັດລົງເປັນແຊງປົດໝາກ ໃສ່ ໝໍ້ຕົ້ມໃຫ້ ສຸກ,ການ ຕົ້ມ ແມ່ນ ໃຊ້ເວລາປະມານປະ1 ຊົ່ວໂມງ, ຕັດຫົວແລ້ວໜີບ ເອົາແກ່ນມັນໄປຂາຍ |

8. ການວິເຄາະບັນຫາ

ເມື່ອຊາວບ້ານທັງ2ບ້ານໄດ້ຄັດເລືອກເອົາຜະລິດຕະພັນທີ່ເປັນບູລະມະສິດໄດ້ແລ້ວ.ຈະໄດ້ມາວິເຄາະ ບັນຫາຂອງແຕ່ລະຜະລິດເພື່ອຊອກຫາສາຍເຫດ, ວິທີການແກ້ໄຂ ແລະ ເພື່ອແກ້ໄຂຊີຊິດການເປັນຢູ່ໃຫ້ດີ ຂື້ນ.

<u>ບ້ານຫ້ວຍຊຸນນ້ອຍ</u>

| **ຊື່ຜະລິດຕະພັນ** | **ບັນຫາ** | **ສາຍເຫດ** | **ວິທີແກ້ໄຂ** | **ຂໍສະເໜີ** |
|---|---|---|---|---|
| ແຂມ | ແມ່ຄ້າກົດລາຄາ | ຍ້ອນບໍ່ມີແມ່ຄ້າຄໍາປະກັນ ລາຄາ | ໃຫ້ແມ່ຄ້າເອົາເງິນ ມາມັດຈໍາ | - ເມື່ອປະຊາຊົນ ເຮັດຕາມສັ່ງ ແລ້ວບໍ່ໃຫ້ ກົດ ລາຄາອີກ<br>- ໃຫ້ທາງຂັ້ນ ເທິງຕິດຕາມ ກວດກາເບິ່ງຕາຊົງເປັ ນປະຈໍາ |
| | | ຍ້ອນເອົາໝາກຫີນຫຼືໝາກປີ ຍັດເພື່ອໃຫ້ໄດ້ນໍ້າໜັກຫຼາຍ, ຍ້ອນໃຫ້ລາຄາຖືກ | ບໍ່ໃຫ້ເອົາຫຍັງຍັດ | |
| | | ຫັກກ້ານຍາວໂພດຢາກໄດນໍ້າ ໜັກຫຼາຍ | ຢາກໃຫ້ປະຊາຊົນ ເຮັດຕາມແມ່ຄ້າສັ່ງ | |
| | | ເອົານໍ້າທີດກ່ອນຈະຂາຍ | | |
| | | ເອົາໄຟລົນເພື່ອໃຫ້ໄດ້ນໍ້າ ໜັກດີ | | |

| | | | | |
|---|---|---|---|---|
| ປໍສາ | ຄຸນນະພາບບໍ່ດີ | ຕາກສາບໍ່ແຫ້ງ ເຮັດໃຫ້ສາແດງ, ລອກເປືອກອອກບໍ່ໝົດ. | ຕາກໃຫ້ແຫ້ງ, ລອກເປືອກໃຫ້ໝົດ | ຢາກໃຫ້ແມ່ ຄ້າວາງມາດຖານຂອງສິນຄ້າອອກມາກ່ອນຈະຮອດລະດູເກັບຊື້ |
| | | ເມື່ອຝົນຕົກສາຢູ່ສາງຈະຕົກໂມກ | ແມ່ຄ້າຄວນກວດກາຄືນໃໝ່ກ່ອນຈະເກັບຊື້ | |
| ເປືອກເມືອກ | ມີໜ້ອຍ | ບໍ່ມີສວນປູກມີແຕ່ເກັບຕາມທຳມະຊາດ | ຈະປູກເປັນສວນບຸກຄົນ | ຢາກໃຫ້ທາງຂັ້ນລົງມາແນະນຳ ຕົກເນັກການປູກໃຫ້ |
| | | ການເກັບແມ່ນເກັບແບບດັບສູນ(ເອົາທັງຮາກ) | ບ້ານຕ້ອງວາງລະບຽບການເກັບກູ້ | |
| | | ເລືອກດິນເກີດ | | |
| ຄັ່ງ | ຄຸນນະພາບບໍ່ດີ | ຕາກບໍ່ແຫ້ງ | ຕາກໃຫ້ແຫ້ງ ແລະເຮັດຕາມແມ່ຄ້າສັ່ງ | ຢາກໃຫ້ຂັ້ນເທິງລົງມາແນະນຳວິທີກຳຈັດສັດຕູຂອງຄັ່ງ(ມົດດຳ) |
| | ລາຄາບໍ່ຄົງທີ | ຍ້ອນແມ່ຄ້າມາຊິງກັນຊື້ | ຢາກໃຫ້ມີ ຜູ້ເກັບຊື້ໜ້ອຍຄົນເທົ່າແຮງດີ ເພາະລາຄາຈະແນ່ນອນກວ່າ ຍ້ອນເຮົາສາມາດຕໍ່ຮອງລາຄາກັນໄດ້ລະຫ່ວາງ ຜູ້ເກັບ ຊື້ ກັບ ຜູ້ ຜະລິດ | |
| | | ຍາມໜ້ອຍລາຄາແພງ, ຕາມມີຫຼາຍລາຄາຖືກ | | |

ບ.ຫ້ວຍເຫຼັກ

| ຊື່ຜະລິດຕະພັນ | ບັນຫາ | ສາຍເຫດ | ວິທີແກ້ໄຂ | ຂໍ້ສະເໜີ |
|---|---|---|---|---|
| ປໍສາ | ລາຄາບໍ່ຄົງທີ | ບໍ່ມີ ບໍລິສັດມາຄໍ້າປະກັນເລື່ອງລາຄາ | ຕ້ອງຊອກພໍ່ຄ້າມາຄໍ້າປະກັນທາງດ້ານລາຄາ | - ຢາກສະເໜີໃຫ້ທາງຂັ້ນເທີ່ງລົງມາເຝິກອົບຮົມການປູກ ແລະ ການເກັບຮັກສາ<br>- ຢາກໃຫ້ມີບໍລິສັດມາຄໍ້າປະກັນດ້ານ ເກັບຊື້ |
| | ຄຸນນະພາບບໍ່ດີ | ດິນຟ້າອາກາດບໍ່ອຳນວຍຄວາມສະດວກເຊັ່ນ:ຝົກຕົກ(ເຮັດສາຕົກໂມກ) | ຕາກໃຫ້ແຫ້ງດີ | |
| | | ສາແກ່ເກີນໄປຈະເປັນສີແດງ ແລະລັກເອົາສາແກ່ປົນສາອ່ອນ | ເລືອກເອົາສາອ່ອນມາລອກຕ້ອງແມ່ນສາທີ່ມີອາຍຸ 2-3 ປີ | |

| | | | | |
|---|---|---|---|---|
| | | | ລົງມາ | |
| | | ລອກເປືອກບໍ່ໝົດ | ລອກໃຫ້ຫຼອນດີເປັນກົບຍາວງາມ | |
| ແຂມ | ຄຸນນະພາບບໍ່ດີ | ຍ້ອນປະຊາຊົນຂາດເຕັກນິກໃນການປັບແຕ່ງ(ການຍາວ) | ລະດົມໃຫ້ ຜູ້ຜະລິດສິນຄ້າໃຫ້ໄດ້ມາດຖານຕາມຄວາມຕ້ອງຂອງຕະຫຼາດ | ຢາກໃຫ້ຈັດຕັ້ງໜ່ວຍກວດກາການເກັບຊື້,ຂາຍຢູ່ພາຍໃນບ້ານ |
| | ການຊັ່ງຕາຊິງແມ່ນບໍ່ມີການຈັດເຈດ | ຍ້ອນມີການຍາດແຍ່ງກັນຊື້ບາງເທື່ອໃຫ້ລາຄາສູງແຕ່ເຮັດຊິງແຮງ | ຜູ້ຜະລິດຕ້ອງມີຄວາມເຂັ້ມແຂງ (ບ້ານຕ້ອງເປັນຫຼັກ) | |
| ຕາວ | ການເກັບກູ້ | ຢູ່ຫ່າງໄກຈາກບ້ານ | ໃຊ້ຂັ້ນໄດຂຶ້ນ, | - ຢາກໃຫ້ທາງບ້ານ ແກ້ໄຂດ້ານຄຸນະພາບເພື່ອຈະປັບປຸງດ້ານລາຄາໃຫ້ດີຂື້ນ.<br>- ຢາກໃຫ້ມີວິຊາການລົງແນະນຳການສັງເກດເບິ່ງໝາກແບບໃດ<br>ຈຶ່ງເປັນໝາກແກ່ ແລະການຕົ້ມ<br>ຈະໃຊ້ເລວາເທົ່າໃດ ໝາກຈຶ່ງສຸກດີ |
| | | ກົກສູງ | | |
| | ລາຄາຖືກ | ຄຸນນະພາບບໍດີ(ຕົ້ມບໍ່ສຸກ, ບາງເທື່ອກໍ່ເອົາໝາກອ່ອນ ຫຼື ແກ່ໂພດ) | ຕົ້ມໃຫ້ສຸກຕ້ອງຄັດເລືອກເອົາໝາກພໍດີກັບຄວາມຕ້ອງການຂອງຕະຫຼາດ | |
| ໂຕແມ້ | ການຂຸດຄົ້ນ | ໝໍ່,ລຳໄມ້ແມ່ນມີຄວາມເສຍຫາຍຫຼາຍເພາະຊາວບ້ານເຮັດແບບດັນສູນ(ໄມ້ຊາງ,ໄມ້ຫົກ) | - ທາງບ້າບຈະວາງລະບຽບການເກັບກູ້<br>- ຕ້ອງຕັດແຕ່ລຳທີ່ມີໂຕແມ້ ລຳທີ່ມີໂຕແມ້ຈະມີລັກສະນະ ມີຮູດວງເຈາະ.ປ້ອງໄມ້ຈະຖື | ເວລາມີປະຊຸມບ້ານຜູ້ທີ່ມີຄວາມຮູ້ທາງດ້ານນີ້ຕ້ອງສະເໜີ ຫຼື ອະທິບາຍໃຫ້ຜູ້ທີ່ບໍ່ຮູ້ເຂົ້າໃຈ |
| ຄັ່ງ | ກົກຖົ່ວແຮຕາຍ | ດິນຟ້າອາກາດບໍ່ອຳນວຍຄວາມສະດວກ(ຝົນບໍ່ຕົກ) | ມັ່ນອານາໄມພື້ນທີ່ສວນຖົ່ວແຮ | |
| | | ແມງແຄງຢຽວໃສ່ຍອດ ແລະໃບເຮັດໃຫ້ໃບຮ່ຽວແລ້ວຕາຍເພາະຍ່ຽວແມງແຄງມັນຮ້ອນ | | |

| | | | | |
|---|---|---|---|---|
| | | ຕູນກັດຮາກ | | |
| | ຄັ່ບໍ່ງາມ | ມົດກິນແມ່ຄັ່ງ | ມັ່ນເບິ່ງແມ່ຄັ່ງ ແລະ ກວດກາເບິ່ງສັດຕູພືດຕະຫຼອດ | |
| | | ເວລາຄັ່ງແກ່ໜູກັດກິນ | | |

## 9. ການສຳຫຼວດພື້ນທີ່ປ່າ

ການສຳຫຼວດພື້ນທີ່ປ່າແມ່ນ.ບໍ່ໄດ້ສຳຫຼວດໝົດພື້ນທີ່ຂອງບ້ານພຽງແຕ່ເລືອກເອົາບາງເຂດເທົ່ານັ້ນ. ຜ່ານ
ການລົງສຳຫຼວດຕົວຈິງຂອງ 2 ບ້ານສ່ວນຫຼາຍເປັນພື້ນທີ່ປ່າເລົ່າອ່ອນທີ່ມີອາຍຸ 2-4 ປີ.ແລະ ມີຄວາມຊຸ້ນສູງ ຢູ່ເຂດນີ້ປ່າແກ່ແມ່ນ ມີໜ້ອຍເຊິ່ງເປັນລັກສະນະປ່າປະສົມ ແລະ ມີສາຍນ້ຳໄຫຼຕາມຮອມຜາ.

ຢູ່ເຂດພື້ນທີ່ປ່າເລົ່າອ່ອນ ແລະ ແຄມຫ້ວຍມີພືດພັນ ແລະ ເຄື່ອງປ່າຂອງດົງເກີດຢູ່ຫຼາຍຊະນິດເຊັ່ນ: ເມືອກ, ປໍສາ, ແຂມ, ກົກຕາວ, ໝາກປີປ່າ, ຜັກກູດນ້ຳ, ຜັກຮາກ ແລະ ອື່ນໆ. ສ່ວນເຂດປ່າແກ່ຈະປະກອບມີ: ໄມ້ຊາງ, ໄມ້ຫົກ, ໄມ້ຊອດ, ໄມ້ເຮ້ຍ, ໄມ້ໄລ່, ໄມ້ກໍ, ໄມ້ຟາວ, ໄມ້ດູ່, ໄມ້ຊີ້, ໄມ້ຫຽນ, ເຄືອ3ຫ່າງ, ສະຄານ, ເຫັດສະນຸ້ນ, ເຫັດບົ້, ລາຍລະອຽດແມ່ນຢູ່ປະຕິທິນລະດູການອາຫານ ແລະ ການຈັດປະເພດຄວາມສຳຄັນຂອງກິນ,ຂາຍ, ຊົມໃຊ້.

<u>ສະພາບລວມທົ່ວໄປຂອງເຄື່ອງປ່າຂອງດົງ</u>

ສຳລັບສະພາບລວມຂອງເຄື່ອງປ່າຂອງດົງແຕ່ລະຊະນິດແມ່ນ ເລືອກເອົາສະເພາະແຕ່ຊະນິດທີ່ສຳຄັນເທົ່ານັ້ນເຊັ່ນ :

<u>ປໍສາ</u>

ແມ່ນເຄື່ອງປ່າຂອງດົງຊະນິດໜຶ່ງທີ່ສາມາດເກີດຂຶ້ນເອງຕາມທຳມະຊາດໄດ້ບ່ອນດິນທີ່ມີຄວາມຊຸ່ມເຢັນ ເຊັ່ນ: ຕີນຜາ, ແຄມຫ້ວຍ ແລະ ຕາມປ່າເລົ່າອ່ອນຄື ປ່າທີ່ຖືກຖາງເຮັດໄຮ່ມາກ່ອນປີຕໍ່ມາສາຈະເກີດຂື້ນ. ຖ້າມີການອານາໄມທຸກປີສາຈະງາມ ແລະ ມີການຂະຫຍາຍອອກຫຼາຍເລື້ອຍໆ ເພາະມັນຂະຫຍາຍໄດ້ດ້ວຍຮາກ ແລະ ແກ່ນ. ປໍສາຢູ່ເຂດນີ້ມີ 2ຊະນິດຄື: ຊະນິດໝາກຍາວ ແລະ ໝາກປ້ອມ

- ຊະນິດໝາກຍາວຈະມີລັກສະນະເປືອກໝາສີຂາວ, ກົກໃຫຍ່ງາມ, ມີງ່າໜ້ອຍແມງໄມ້ກໍ່ບໍ່ມັກເຈາະ ແລະ ມີນ້ຳໝັກຫຼາຍກວ່າຊະນິດປ້ອມ
- ຊະນິດປ້ອມເປືອກບາງມີສີດຳ,ຕົ້ນຕ່ຳມີງ່າຫຼາຍແມງໄມ້ມັກເຈາະເຮັດໃຫ້ບໍ່ມີນ້ຳລໍ່ລ້ຽງເຮັດໃຫ້ສາເປັນຕູດ ແລະສາຈະຕິດແກ່ນເປັນສາຍເຫດເຮັດໃຫ້ ສາລອກຍາກ

*ບໍເວດປໍສາ*

ມັກເກີດຢູ່ຕາມບ່ອນດິນທີ່ມີຄວາມຊຸ່ມ(ເຂດຕີນຜາ, ແຄມນ້ຳ) ແລະ ຕາມປ່າເລົ່າແຕ່ສາທີ່ເກີດ ຢູ່ປ່າເລົ່າອ່ອນຈະບໍ່ມີງາມຄືກັບສາທີ່ເກີດຕາມຕີນຜາແລະແຄມຫ້ວຍ ຕົ້ນໄມ້ທີ່ເກີດຢູ່ບໍລິເວນປ່າສາ ຈະມີໄມ້ຈິງ, ໄມ້ຊາງ, ກົກກ້ວຍ, ປ່າຫຍ້າຍຸງ.

*ການຂະຫຍາຍພັນ*

ປໍສາຂະຫຍາຍພັນໄດ້ດ້ວຍແກ່ນ,ເຫົ້ງາ ແລະ ຮາກດັ່ງນັ້ນມັນຈິ່ງຂະຫຍາຍເອງໄດ້ໃນທຳມະ ຊາດທີ່ຜ່ານມາຊາວບ້ານບໍ່ເຄີຍປູກປໍສາມີແຕ່ເມື່ອມັນເກີດຂື້ນຢູ່ພື້ນທີ່ແລ້ວປົກປັກຮັກສາເອົາຂອງໃຜ ລາວປະຈຸບັນກໍ່ມີບາງຄອບຄົວທີ່ເລີ້ມປູກແບບລັກຊະນະປູກເສີ້ມພື້ນທີ່ມີປໍສາຢູ່ແລ້ວເຊັ່ນ:ພື້ນທີ່ສວນ ແຄມນ້ຳ, ປ່າເລົ່າອ່ອນທີ່ເຮັດການຜະລິດມາແລ້ວ

*ວິທີການກູ້ ແລະ ການຕົບແຕ່ງກ່ອນຈະຂາຍ*

ສາທີ່ມີອາຍຸໄດ້ 8 ເດືອນຂື້ນໄປສາມາດໃຫ້ຜົນພະລິດໄດ້ແລ້ວ, ວິທີເອົາແມ່ນໃຊ້ຜ້າຕັດຕົ້ນ, ງ່າ. ລອກອອກຈາກແກນແລ້ວໃສ່ເປົາເປັຫຼືມັດຄືຫາບຟື້ນກໍ່ໄດ້. ຖ້າລອກບໍ່ທັນຊາວບ້ານຈະເອົາສາແຊ່ນ້ຳ ປະໄວ້ເພື່ອບໍ່ໃຫ້ສາແດງ ແລະ ສາຍັງລອກງາຍເພາະມີຄວາມຊຸ່ມແຕ່ບໍ່ໃຫ້ ກາຍ1ມື້.ຈະເຮັດເນົ່າບໍ່ ງາມ. ການເກັບກູ້ປໍສາຢູ່ເຂດນີສາຕ້ອງມີອາຍຸ 2-3 ປີລົງມາ, ເພາະສາຢູ່ໃນຊ່ວງນີ້ຈະເປັນສາອ່ອນ ແລະ ລອກງ່າຍ. ລະດູການທີ່ເໝາະສົມລຳລັບການເກັບກູ້ສາແມ່ນ ຊ່ວງເດືອນ 3-5 ເພາະຊ່ວງນີ ແມ່ນສາຈະລອກງ່າຍຖ້າກາຍນີໄປປໍສາຈະຕິດແກນ ແລະ ລອກຍາກ

*ການຕະຫຼາດ*

ແມ່ນມີແມ່ຄ້າ,ພໍ່ຄ້າເກັບຊື້ຢູ່ກັບບ້ານແລ້ວຂາຍ ໃຫ້ແມ່ຄ້າໝອງຊຽວຕໍ່ບາງປີສາແມ່ນບໍ່ພຽງພໍ ກັບຄວາມຕ້ອງຂອງຕະຫຼາດຍ້ອນວ່າ:

- ຊ່ວງລະດູການເກັບກູ້ຈະຖືກຊ່ວງກະກຽມດິນເພື່ອທຳການຜະລິດ
- ສາມີໜ້ອຍເພາະສ່ວນຫຼາຍແມ່ນເອົາຈາກທຳມະຊາດບໍ່ໄດ້ປູກ.

ສ່ວນເລື່ອງລາຄາແມ່ນທາງແມ່ຄ້າໝອງຊຽວຈະອອກມາກ່ອນລະດູເກັບກູ່ຂອງແຕ່ລະປີການຂື້ນລົງ ລາຄາຂອງປໍສາແມ່ນອີງຕາມທ້ອງຕະຫຼາດ. ແລະ ຜູ້ທີ່ເກັບຢູ່ບ້ານແມ່ນຕ້ອງໄດ້ເສຍພາສີໃຫ້ບ້ານຄື: ຄົນ1/ລະດູການ/50.000ກີບ. ສ່ວນທາງບໍລິສັດແມ່ນເສຍໃຫ້ເມືອງເປັນປີ. ແຕ່ລະປີຈະບໍ່ຢູ່ເກົ່າຂື້ນ ກັບການປະມູນຂອງພວກບໍລິສັດ.

**<u>ແຂມ</u>**

ເກີດເອງຕາມທຳມະຊາດມັກເກີຕາມເປີ້ນພູ,ຍອດຫ້ວຍບ່ອນດິນດານແຂງດິນປະເພດນີປູກພືດບໍ່ງາມ. ບໍລິເວດແຂມອອກຈະມີສຸ່ມໄມ້ຊອດ, ຕົ້ນກໍ, ຫຍ້າຂີມບາງ(ຫຍ້າ3ລ່ຽມ), ກົກເລົາເວົ້າລວມແລ້ວແຂມມັກເກີດຢູ່ປ່າເລົ່າອ່ອກທີ່ມີອາຍຸ 2-3 ປີ. ແຂມສາມາດຂະຫຍາຍພັນໄດ້ດ້ວຍເຫົ້າ.

*ວິທີການກູ້ ແລະ ການຕົບແຕ່ງກ່ອນຈະຂາຍ*

ແຂມແມ່ນເກັບກູ້ໃນຊ່ວງເດືອນ 2-3 ໃນຊ່ວງນີແຂມກຳລັງງາມ ແລະ ມີຫຼາຍ. ການເອົາແຂມແມ່ນໃຊ້ຜ້າຂໍເກາະ ແລະຕັດເອົາ. ກ່ອນຈະຂາຍແມ່ນຕ້ອງໄດ້ຕາກແດດໃຫ້ດອກຫ້າວແລ້ວຟາດເອົາດອກອອກ ໃຫ້ໝົດ,ລິງງ່າແຂມແມ່ນມີແມ່ຄ້າມາເກັບຊື້ກັບບ້ານລາຄາ1ກິໂລ/3000ກີບ. ຮອບວຽນຂອງການເກັບກູ້ ປີ1ເທື່ອ1

<u>ເປືອກເມືອກ</u>

ແມ່ນປະເພດເຄື່ອງປ່າຂອງດົງທີ່ເປັນເຄືອສາມາດເກີດເອງຕາມທຳມະຊາດໄດ້ບໍ່ວ່າປ່າເລົ່າຫຼືປ່າດົງ ແຕ່ມັນມີການຂະຫຍາຍຕົວແຕກຕ່າງກັນລະຫ່ວາງສອງເຂດນີຄື:

- ປ່າເລົ່າແມ່ນມັນຈະມີການຂະຫຍາຍຕົວຊ້າບໍ່ງາມ,ເຄືອນ້ອຍ, ໃບຂອງມັນບົ້ງມັກກິນທີ່ສຸດເມືອກທີ່ ເກີດຢູ່ປ່າເລົ່າມີອາຍຸການແມ່ນ 4 ປີຖ້າບໍ່ມີການເກັບກູ້ແມ່ນຈະຕາຍເອງ.
- ເມືອກທີ່ເກີດຢູ່ປ່າດົງ ແມ່ນຈະເປັນເຄືອໃຫຍ່ຍາວງາມດີ ແລະ ມີອາຍຸເຖິງ 6 ປີຈຶ່ງຕາຍເອງ ເມື່ອມີອາຍຸໄດ້ 2 ປີແມ່ນສາມາດເກັບກູ້ໄດ້ແລ້ວ ແລະ ແມ່ນສາມາດເກັບໄດ້ຕະຫຼອດປີ.ສ່ວນຊັບພະຄຸນເອົາໄປເຮັດຫຍັງຊາວບ້ານແມ່ນບໍ່ຮູ້ຈັກ.

*ນິເວດ*

ເມືອກແມ່ນມັກເກີດຢູ່ບ່ອນດິນທີ່ມີຄວາມຊຸ່ມເຢັນເຊັ່ນ: ແຄມຫ້ວຍ ແລະ ດິນຕີນຜາ.ໃນບໍລິເວນທີ່ເມືອກເກີດມັກຈະພົບເຫັນປ່າໝໍ່ໄມ້ຫົກ, ຕົ້ນກ້ວຍ, ຜັກຮາກ. ສ່ວນປະເພດຕົ້ນໄມ້ ຈະມີ ກົກຄ້າ, ກົກເຕັນ, ກົກທອງ, ກົກສະພຸງ,

*ການຂະຫຍາຍພັນ*

ເມືອກແມ່ນສາມາດຂະຫຍາຍພັນໄດ້ດ້ວຍຮາກແຕ່ທີ່ຜ່ານມາຊາວບ້ານແມ່ນບໍ່ ມີໃຜເຄີຍນຳມາປູກຈັກເທື່ອເພາະຊາວບ້ານຄິດວ່າເມືອກມັນເລືອກດິນເກີດເວລາໄປຊອກຢູ່ປ່າຈະມັກມີຢູ່ ແຕ່ປ່າດົງບ່ອນທີ່ຄວາມຊຸ່ມເຢັນຫຼາຍ,

*ການເກັບກູ້*

ເມືອກມີອາຍຸ2ປີຂື້ນໄປກໍ່ສາມາດເກັບກູ້ໄດ້ແລ້ວ ແຕ່ວ່າຊາວສ່ວນຫຼາຍຈະບໍ່ຈິນໃຈເລືອງອາຍຸການໄປ ຊອກແມ່ນພົບເຫັນຕົ້ນໃດແມ່ນຈະເກັບກູ້ເອົາເລີຍຈະບໍ່ສົນເລືອງອາຍຸເພາະມັນຢູ່ປ່າໃຜເຫັນກ່ອນແມ່ນ ຜູ້ນັ້ນໄດ້.ອຸປະກອນທີ່ໃຊ້ມີ ຜ້າເພື່ອຕັດລຳ,ຫຼື ເຄືອ, ຖ້າເປັນຮາກແມ່ນໃຊ້ສຽມຂຸດເອົາ. ການຕັດເຄືອ,ຮາກ ແມ່ນຕັດເປັນທ່ອນຍາວປະມານ 0.5- 1 ແມັດ ແລ້ວທັບໃຫ້ມັນແຕກແລ້ວລອກເອົາແຕ່ ເປືອກໃສ່ເປົ໋າ ຫຼື ກະແຢ້ ເປັນມາບ້ານ.ເມືອກແມ່ນ ສາມາດເກັບກູ້ໄດ້ຕະຫຼອດປີ. ຍົກເວັ້ນເດືອນ 6-8 ເພາະເປັນ ຊ່ວງລະດູຝົນ ບໍ່ມີຜູ້ເກັບຊື້

*ການຕົບແຕ່ງກ່ອນຈະຂາຍ*

ແມ່ນຕ້ອງໄດ້ເອົາເປືອກທີ່ລອກມາແຕ່ປ່າມາຕາກແດດໃຫ້ແຫ້ງດີສາກ່ອນຄື:ຖ້າ ແດດກ້າດີແມ່ນ ຕາກແດດປະມານ1 ມື້.ຖ້າແດດບໍ່ກ້າແມ່ນຕ້ອງໄດ້ຕາກ 2 ມື້ ເພື່ອຮັບປະກັນບໍ່ໃຫ້ມັນຕິກໂມກໄວ້. ແລ້ວມັດທົບເຄິ່ງຂອງລວງຍາວຕອນຕັດທຳອິດໃຫ້ເປັນລະບຽບງາມດີ. ແລ້ວຂາຍເປັນກິໂລງ.

*ການຕະຫຼາດ*

ແມ່ນມີພໍ່ຄ້າເກັບຊື້ຢູ່ກັບບ້ານຄືລາຄາ1ກິໂລ/5000ກີບແຕ່ລະປີການເກັບຊື້ເມືອກແມ່ນບໍ່ມີບັນຫາຫຍັງລາຄາແຕ່ລະປີທາງບໍລິສັດແມ່ນຈະວາງອອກມາກ່ອນຈະຮອດລະດູການເກັບກູ້.

<u>ຕາວ</u>

ແມ່ນເຄື່ອງປ່າຂອງດົງຊະນິດໜຶ່ງທີ່ຈັດຢູ່ໃນປະເພດຕະກຸນປາມ ແລະ ມີຄຸນປະໂຫຍດການນຳໃຊ້ໄດ້ຫຼາຍ ຢ່າງເຊັ່ນ:ຍອດສາມາດນຳມາແກງກິນຄືກັບໜໍ່ໄມ້ແຕ່ຈະມີລົດຫວານກວ່າ, ໃບຂອງມັນນຳມາໃຊ້ເຮັດຫຍ້າມຸ້ງເຮືອນແລະ ໝາກຂອງມັນແມ່ນເປັນສິນຄ້າ(ເຮັດຕົ້ມນ້ຳຫວານເປັນຕົ້ນ) ຕາວທີ່ສາມາດໃຫ້ຜົນຜະລິດໄດ້ຕ້ອງມີອາຍຸ 18-20 ປີ ແລະ ຕົ້ນ 1 ແມ່ນໃຫ້ຜົນຜະລິດໄດ້ພຽງແຕ່ 2 ປີເທົ່ານັ້ນແລ້ວກໍຕາຍເອງຕາວຈະບໍ່ຄືເຄື່ອງປ່າຂອງດົງຊະນິດອື່ນເພາະຕາວຖ້າເອົາຍອດມາກິນແລ້ວຈະຕາຍເລີຍຈະບໍ່ປົ່ງຍອດໃໝ່, ການໃຫ້ໃນແຕ່ລະປີກໍ່ຕ່າງກັນຄື:

- ປີທີ່ 1 ຕົ້ນ1ໃຫ້ໝາກ 200ກິໂລ
- ປີທີ່ 2 ຕົ້ນ 1 ໃຫ້ໝາກ100ກິໂລ(ແກນທີ່ຕົ້ມແລ້ວ)

*ບໍເວດ*

ຕາວແມ່ນມັກເກີດຢູ່ບ່ອນທີ່ມີຄວາມຊຸ່ມເຢັນເປັນຕົ້ນແມ່ນປ່າດົງໃຫຍ່,ດິນແຄມຫ້ວຍ, ດິນຕີນ

ຜາຫີນ. ຕົ້ນໄມ້ທີ່ເກີດຢູ່ໃນເຂດນີ້ຈະມີ ຕົ້ນກູ, ຕົ້ນກ້ວຍ, ກົກເຕັນ, ຕົ້ນສະພຸງ, ກົກດອກທອງ, ໄມ້ຈິງ. ສ່ວນປະເພດໄມ້ປ່ອງຈະມີໄມ້ຫົກ, ໄມ້ຊອດ. ນອກຈາກນີ້ແລ້ວຍັງມີ ໝາກແໜ່ງ, ເຄືອ 3 ຫ່າງ, ຜັກຮາກ, ເນືອກ ແລະ ສະຄ່ານນ້ອຍ.

*ການກະຈາຍພັນ*

ແມ່ນຂະຫຍາຍພັນໄດ້ດ້ວຍການກ້າແກ່ນ

*ການເກັບກູ້*

- ຖ້າກິນຍອດແມ່ນສາມາດເກັບໄດ້ຕະຫຼອດປີ ແລະ ໃຊ້ຜ້າຟັນ
- ໝາກແມ່ນເດືອນ 12 ປີ ອຸປະກອນໃຊ້ແມ່ນ ເຮັດຂັ້ນໄດ ຫຼື ໄມ້ສ້າວເກາະເປັນແຊງລິງ

*ການປຸ່ງແຕ່ງກ່ອນຈະຂາຍ.*

ແມ່ນຕ້ອງໄດ້ຕົ້ມສາກ່ອນການຕົ້ມຕ້ອງໄດ້ປົດໝາກອອກຈາກແຊງ ແລ້ວໃສ່ໝໍ້ຕົ້ມຕາມການຄິດໄລ່ຂອງຊາວບ້ານແມ່ນ4ແຊງໄດ້20ໝໍ້.1ໝໍ້ໃຊ້ເວລາຕົ້ມຢູ່ 1 ຊົ່ວໂມງຈິ່ງຈະສຸກ.

ຫຼັງຈາກນັ້ນ

ຕັດຫົວບິດເອົາແຕ່ ແກນ ການໝາກຕາວຖ້າຕົ້ມບໍ່ສຸກມາກຈະແດງບາງເທື່ອກໍ່ດໍາ

*ການຕະຫຼາດ*

ແມ່ນມີແມ່ຄ້າມາເກບຊື້ຢູ່ກັບບ້ານຄືກັບແຂມ ແລະ ປໍສາ

<u>ຄັ່ງ</u>

ກໍ່ແມ່ນເຄື່ອງຂອງດົງຊະນິດໜຶ່ງທີ່ມີຕົ້ນກໍາເນີດມາຈາກປ່າ. ແຕ່ປະຈຸບັນຊາວບ້ານໄດ້ຮູ້ຈັກລ້ຽງໂດຍອາໄສຕົ້ນຖົ່ວແຮ, ຕົ້ນໄມ້ລຽງເປັນບ່ອນລ້ຽງຄັ່ງໃສ່. ຕົ້ນຖົ່ວແຮຕ້ອງມີອາຍຸໄດ້6ເດືອນແລ້ວປ່ອຍຄັ່ງໃສ່. ຕົ້ນລຽງແມ່ນ1ປີກັບ6ເດືອນຈິ່ງສາມດປ່ອຍຄັ່ງໃສ່ໄດ້

*ວິທີປ່ອຍຄັ່ງ*

ທີ່ຜ່ານມາການປ່ອຍຄັ່ງຂອງຊາວບ້ານແມ່ນປ່ອຍຕອນເຊົ້າແລະຕອນແລງ.ດອນເຊົ້າແມ່ນ6-7ໂມງ, ດອນແລງ4-5ໂມງແມ່ຄ່ງຈິ່ງຈັບດີເພາະຊ່ວງແດດຈະອ່ອນຫ້າມບໍ່ໃຫ້ປ່ອຍຕອນທ່ຽງເພາະມັນແດດແມ່ຄັ່ງຈະໄຕ່ອອກ.ການມັດແມ່ຄັ່ງໃສ່ງ່າໄມ້ແມ່ນໃຫ້ມັດໃສ່ງ່າທໍາອິດຂອງຕົ້ນໄມ້ ແລະ ມັດໃສ່ເບື້ອງທາງ

ທິດຕາເວັນອອກແດດຕອນເຊົ້າຈະເປັນແດດອ່ອນແມ່ຄັ່ງສາມາດຢູ່ໄດ້.ການປ່ອຍຄັ່ງປີ 1 ປ່ອຍ 2 ເທື່ອຄື:

- ຄັ່ງດໍປ່ອຍເດືອນ10 ເດືອນ4 ເກັບກູ້
- ຄັ່ງປີປ່ອຍເດືອນ11 ເດືອນ5 ເກັບກ

ຄັ່ງ2ຊະນິດນີ້ຄຸນລັກຊະນະແມ່ນຄືກັນ. ຢາກຮູ້ໂຕໃດເປັນຄັ່ງດໍເຮົາສັງເກດເບິ່ງການຈັບຕົວຂອງແມ່ຄັ່ງຖ້າເປັນແຜນບາງແມ່ນຈະເປັນຄັ່ງດໍ, ຖ້າໜາແມ່ນຄັ່ງປີ.

*ການບົວລະບັດ*

ເມື່ອປ່ອຍແລ້ວຕ້ອງໄດ້ໄປກວດເບິ່ງສັດຕູພືດເປັນຕົ້ນແມ່ນມົດແດງຊາຍ,ໜູກັດຮັງແມ່ຄັ່ງ. ການປ້ອງກັນຂອງຊາວບ້ານ. ມົດແມ່ນໃຊ້ຜ້າຈຸ່ມນ້ຳມັນແລ້ວມັດຕິດກັບຕົ້ນຖົ່ວແຮ, ໜູແມ່ນເຮັດກະຖຳໃສ່.

*ການເກັບກູ້*

ພາຍຫຼັງປ່ອຍໄດ້ 6 ເດືອນສາມາດເກັບກູ້ໄດ້. ການເກັບກູ້ແມ່ນໃຊ້ຜ້າຕັດບ່ອນບໍລິເວດທີ່ມີຄັ່ງຢູ່, ຖ້າຄັ່ງແນວພັນແມ່ນຕັດເປັນຕອນ20ຊມອຸປະກອນທີ່ໃສ່ແມ່ນກວຍ,ກະບຸງ, ຫ້າມໃສ່ເປົາມັນຈະຮ້ອນແລ້ວແມ່ຄັ່ງຈະໄຕ່ອອກ.

*ການເກັບຮັກສາ*

- ແນວພັນຄັ່ງຖ້າບໍ່ມີຕົ້ນຖົ່ວແຮ, ຕົ້ນລຽງແມ່ນໃຫ້ປ່ອຍໃສ່ຕົ້ນໝາກແຟນຢູ່ປ່າກໍ່ໄດ້
- ຄັ່ງທີ່ຈະເອົາໄປຂາຍຕ້ອງຕາກໃຫ້ແຫ້ງດີ

## 10. ຂໍ້ມູນຈາກສຳພາດຄອບຄົວຕົວຢ່າງໃນ 3 ລະດັບ (ຮັ່ງມີ, ປານກາງ ແລະ ທຸກຈົນ) (ລາຍຮັບ-ລາຍຈ່າຍ ປີ 2006)

ນອກຈາກສຳຫຼວດຂໍ້ມູນໝົດບ້ານແລ້ວ. ພວກເຮົາຍັງໄດ້ສຳພາດ 3 ລະດັບຄອບຄົວອີກ. ເພື່ອຢາກຮູ້ເຖິງບົດບາດ ແລະ ຄວາມສຳຄັນທາງດ້ານລາຍຮັບຂອງເຄື່ອງປ່າຂອງດົງທີ່ມີຕໍ່ການດຳລົງຊີວິດຂອງຊາວບ້ານ(ສຳລັບລາຍລະອຽດຢູ່ເອກະສານແນບທ້າຍໜ້າທີ່.38, 39, 40)

<u>ຄອບຄົວຮັ່ງມີ</u>







- ລາຍຮັບທີ່ສຳຄັນຂອງຄອບຄົວຮັ່ງມີທັງ 2 ບ້ານ ເຫັນວ່າມີຄວາມແຕກຕ່າງກັນ, ບ້ານຫ້ວຍເຫຼັກລາຍຮັບທີ່ໄດ້ຫຼາຍກວ່າໝູ່ແມ່ນໄດ້ຈາກການ ຊື້ຂາຍເຄື່ອງປ່າຂອງດົງ(ຄັ່ງແຫ້ງ, ແນວພັນຄັ່ງ, ເບັ້ຍໄມ້ລຽງ ກວມ52% ອງລາຍຮັບທັງໝົດຂອງຄອບຄົວ.ແລະອີງລົງມາແມ່ນໄດ້ຈາກການຂາຍເຄື່ອງປ່າຂອງດົງ (ແຂມ, ປໍສາ,)ກວມ39% ແລະ ການບໍລິການອື່ນໆ, ບ້ານຫ້ວຍຮຸນນ້ອຍລາຍຮັບທີ່ໄດ້ຫຼາຍກວ່າໝູ່ແມ່ນໄດ້ຈາກການ ບໍລິການສີເຂົ້າ,ດອກເບັ້ຍເງິນຝາກ ກວມ 50% ຂອງລາຍຮັບທັງໝົດຂອງຄອບຄົວ ແລະ ຮອງລົງມາແມ່ນໄດ້ຈາກການຂາຍສັດລ້ຽງກວມ29%
- ຖ້າປຽບທຽບລາຍຮັບທີ່ໄດ້ມາຈາກເຄື່ອງປ່າຂອງດົງທັງ 2 ບ້ານເຫັນວ່າບ້ານຫ້ວຍເຫຼັກມີລາຍຮັບຫຼາຍກວ່າເນື່ອງຈາກມີພື້ນທີ່ປໍສາ, ແຂມເປັນຂອງດິນເອງ ແລະ ມີເວລາຫວ່າງທີ່ສາມາດໄປເກັບໄດ້. ບ້ານຫ້ວຍຮຸນນ້ອຍມີລາຍຮັບຈາກເຄື່ອງປ່າຂອງດົງໜ້ອຍກວ່າຍ້ອນບໍ່ມີແຮງງານ ແລະ ບໍ່ມີເລວາໄປເກັບ

<u>ຄອບຄົວປານກາງ</u>







- ລາຍຮັບທີ່ສຳຄັນຂອງຄອບຄົວປານກາງທັງ 2 ບ້ານ ເຫັນວ່າມີຄວາມແຕກຕ່າງກັນ, ບ້ານຫ້ວຍເຫຼັກລາຍຮັບທີ່ໄດ້ຫຼາຍກວ່າໝູ່ແມ່ນໄດ້ຈາກລາຍຮັບອື່ນໆມັນຈະລວມມີ ຮັບຈ້າງປຸກເຮືອນ ຮັບຈ້າງປິ່ນປົວຄົນເຈັບ, ດອກເບັ້ຍເງິນຝາກ, ລູກຝາກມາໃຫ້.ກວມ70% ຂອງລາຍຮັບທັງໝົດຂອງ ຄອບຄົວ ແລະຮອງ

ລິງມາແມ່ນ ໄດ້ຈາກການຂາຍສັດລ້ຽງ(ໝູ ແລະ ງົວ)ກວມ14%   ບ້ານຫ້ວຍຮຸນນ້ອຍລາຍຮັບທີ່ໄດ້ຫຼາຍກວ່າໝູ່ແມ່ນໄດ້ຈາກການ ຂາຍສັດລ້ຽງ(ງົວ, ໝູ, ສັດປີກ)ກວມ 42%  ຂອງລາຍຮັບທັງ ໝົດຂອງຄອບຄົວ ແລະ ຮອງລົງມາແມ່ນໄດ້ຈາກການຂາຍພືດກະສິກຳກວມ32%

- ຖ້າປຽບທຽບລາຍຮັບທີ່ໄດ້ມາຈາກເຄື່ອງປ່າຂອງດົງທັງ 2 ບ້ານເຫັນວ່າບ້ານຫ້ວຍເຫຼັກມີລາຍຮັບໜ້ອຍກວ່າເນື່ອງຈາກຄອບຄົບນີ້ແມ່ນຍຶດຖືອາຊີບເຮັດນາເປັນຫຼັກ ແລະ ການຮັບເໝົາກໍ່ສ້າງ. ການໄປເກັບເຄືອງປ່າຂອງດົງແມ່ນອາໄສເວລາຫ່ວາງວຽກ ແລະ ອີງຕາມລະດູການຂອງເຄື່ອງປ່າຂອງດົງທີ່ອອກ . ບ້ານຫ້ວຍຮຸນນ້ອຍມີລາຍຮັບຈາກເຄື່ອງປ່າຂອງດົງຫຼາຍກວ່າເນື່ອງຈາກວ່າມີແຮງງານຫຼາຍ, ມີເວລາຫວ່າງເພາະຊີບຫຼັກແມ່ນເຮັດໄຮ່ຖົ່ວແຮເພື່ອລ້ຽງຄັ່ງ ແລະ ລ້ຽງສັດ, ການລຽງແມ່ນລ້ຽງເປັນກຸ່ມແຕ່ລະທິດປ່ຽນກັນໄປເບິ່ງ, ນອກຈາກນັ້ນແມ່ນເອົາເວລາໄປເກັບເຄື່ອງຂອງດົງ,

<u>ຄອບຄົວທຸກຈົນ</u>







- ລາຍຮັບທີ່ສຳຄັນຂອງຄອບຄົວຂາດກິນຂອງທັງ 2 ບ້ານ ເຫັນວ່າມີຄວາມແຕກຕ່າງກັນ, ບ້ານຫ້ວຍເຫຼັກລາຍຮັບແມ່ນມີລາຍຮັບມາຈາກເຄື່ອງປ່າຂອງດົງ ແລະ ພືດກະສິກຳເທົ່ານັ້ນບ້ານຫ້ວຍຮຸນນ້ອຍລາຍຮັບມາຈາກການຂາຍເຄື່ອງປ່າ, ພືດກະສິກຳ, ສັດລ້ຽງ ແລະ ຄ່ແຮງງານລະລາຍຮັບທີ່ໄດ້ຫຼາຍກໍ່ຕ່າງກັນຄື: ບ້ານຫ້ວຍເຫຼັກແມ່ນໄດ້ຈາກພືດກະສິກຳຫຼາຍກວມ86%ຂອງລາຍຮັບ. ສ່ວນບ້ານຫ້ວຍຮຸນນອັຍແມ່ນໄດ້ຈາກການລ້ຽງສັດ
- ຖ້າປຽບທຽບລາຍຮັບທີ່ໄດ້ມາຈາກເຄື່ອງປ່າຂອງດົງທັງ 2 ບ້ານເຫັນວ່າບ້ານຫ້ວຍເຫຼັກມີລາຍຮັບຫຼາຍກວ່າເນື່ອງຈາກວ່າລາວບໍ່ມີພື້ນທີ່ທຳການຜະລິດຫຼາຍເລີ້ຍອາໄສແຕ່ທຳມະຊາດເປັນບ່ອນຫາກິນ ເຄື່ອງປ່າຂອງດົທີ່ລາວເກັບມີ ແຂມ, ປໍສາ, ເບັ້ຍໄມ້ລ້ຽງ ແລະ ປ່ອຍຄັ່ງຂາຍ.ບ້ານຫ້ວຍຮຸນນ້ອຍມີລາຍຮັບຈາກເຄື່ອງປ່າຂອງດົງຫຼາຍກວ່າເນື່ອງຈາກວ່າ ຄອບຄົວຂອງລາວຂາດພື້ນທີ່ເຮັດການຜະລິດ ແລະ ອາຊີບຫຼັກຂອງລາວກໍ່ເຮັດສວນຖົ່ວແຮປ່ອຍຄັ່ງດັ່ງນັ້ນເມື່ອຮອດລະດູການມີເຄື່ອງປ່າຂອງດົງ ແຕ່ລະຊະນິດ.ຄອບຄົວໄປຫາຊ່ວຍກັນ

# ສະຫຼຸບ

ຜ່ານການລົງສຶກສາເກັບກຳຂໍ້ມູນ, ວິເຄາະ ແລະ ຂຽນບົດລາຍງານ. ສາມາດຮູ້ໄດ້ເຖິງບົດບາດ ແລະ ຄວາມສຳຄັນຂອງເຄື່ອງປ່າຂອງດົງທີ່ມີນຕໍ່ການເປັນຢູ່ຂອງຊາວບ້ານທີ່ນຳມາກິນ, ຂາຍ ແລະ ຊົມໃຊ້ , ເຊິ່ງມັນສະແດງໃຫ້ເຫັນໃນແຕ່ລະກິດຈະກຳຄື:

**ການຈັດປະເພດເຄື່ອງປ່າທີ່ສຳຄັນ**

ການຈັດປະເພດແມ່ນໄດ້ແບ່ງອອກເປັນ 3 ປະເພດຄື: ກິນ, ຂາຍ ແລະ ຊົມໃຊ້ ທັງ 2ບ້ານແມ່ນປະຕບັດຄືກັບ

- ບ້ານຫ້ວຍເຫຼັກ:ສຳລັບກິນ ປາ, ໜໍ່ຂົມ, ກຸ້ງ, ສຳລັບຂາຍ ປໍສາ, ແຂມ, ຄັ່ງ, ສຳລັບຊົມໃຊ້ ຟືນ, ໄມ້ຈິງ ແລະ ໄມ້ເຮ້ຍ
- ບ້ານຫ້ວຍຣຸນນ້ອຍ: ສຳລັບກິນ ໜໍ່ຫົກ, ປາ, ປູຫີນ, ສຳລັບຂາຍ, ແຂມ,ປໍສາ, ເມືອກ, ສຳລັບຊົມໃຊ້ ຟືນ, ໄມ້ຈິງ ແລະ ໄມ້ເຮ້ຍ

**ດ້ານການຜະລິດ**

ສຳລັບການຜະລິດຂອງຊາວບ້ານໃນປີ1 ແມ່ນປະກອບມີຫຼາຍກິດຈພກຳເປັນຕົ້ນແມ່ນການເຮັດໄຮ່, ນາ, ສ່ວນ ແລະ ລ້ຽງສັດ.

**ລະດູການອາຫານ**

ອາຫານທີ່ປະຊາຊົນກິນ ສວ່ນໃຫຍ່ ແມ່ນນຳອອກມາຈາກປ່າ. ແຕ່ລະຊະນິດແມ່ນມີລະດູການທີ່ແຕກຕ່າງກັນ ແລະ ມີບາງຊະນິດແມ່ນສາມດກິນໄດ້ທຸກລະດູການເຊັ່ນ: ໝາກປີປ່າ, ຍອດຫວາຍ,ຍອດບຸນ, ຜັກໝອກ ແລະ ຍັງມີປະເພດສັດປ່າອີກເຊັ່ນ ປາ, ເຈຍ, ນົກ. ເຄື່ອງປ່າຂອງດົງທີ່ກິນເປັນລະດູການລວມມີ ໜໍ່ໄມ້, ເຫັດ ແລະ ຜັກອື່ນອີກຫຼາຍຊະນິດ.

**ລາຍຮັບ**

ລາຍຮັບຂອງທັງ 2 ບ້ານແມ່ນໄດ້ມາຈາກການຂາຍເຄືອ່ງປ່າຂອງດົງເປັນສ່ວນໃຫຍ່( ຄັ່ງ, ປໍສາ, ແຂມ ແລະ ໂຕແມ້ ) ສະເລ່ຍແລ້ວ ບ້ານຫ້ວຍເຫຼັກມີລາຍຮັບ 541.665.000ກີບ/ ປີ ແລະ ບ້ານຫ້ວຍຣຸນນ້ອຍ ແມ່ນ 234.210.000 ກີບ/ ປີ

**ລາຍຈ່າຍ**

ສຳລັບລາຍຈ່າຍແມ່ນຈ່າຍຊື້ ເຂົ້າ, ອາຫານ, ເຄື່ອງນຸ່ງ, ຢາປົວພະຍາດ ແລະ ຈ່າຍອື່ນໆ ສະເລ່ຍ ບ້ານຫ້ວຍເຫຼັກ 359.372.000ກີບ/ ປີ ແລະ ບ້ານຫ້ວຍຮຸນນ້ອຍ 100.260.000ກີບ/ ປີ.

**ການຄັດເລືອກມາດຖານ**

ສຳລັບການຄັດເລືອກມາດຖານແມ່ນເລືອກເອົາຜະລິດຕະພັນທີ່ທ່າແຮງ ແລະ ການເປັນໄປໄດ້ສູງທີ່ມັນສາມາດເປັນລາຍຮັບໃຫ້ບ້ານ ແລະ ຄອບຄົວທີ່ໄດ້ມາຈາກການອັນດັບທີ່1, 2, 3ຂອງກິນ, ຂາຍ ແລະ ຊົມໃຊ້

- ບ້ານຫ້ວຍເຫຼັກ ຜະລິດຕະພັນທີ່ນຳມາຄັດເລືອກມາດຖານທັງໝົດມີ 10 ຊະນິດຄື: ປາ, ໝໍ່ຂົມ, ກຸ້ງ, ປໍສາ, ແຂມ, ຄັ່ງ, ຟືນ, ໄມ້ຈິງ, ໄມ້ແຮ້ ແລະ ໝາກຕາວ.
- ບ້ານຫ້ວຍຮຸນນ້ອຍຜະລິດຕະພັນທີ່ນຳມາຄັດເລືອກມາດຖານທັງໝົດມີ 11 ຊະນິດຄື: ໜໍ່ຫົກ, ປາ, ປູຫີນ, , ແຂມ, ປໍສາ, ເມືອກ, ຄັ່ງ, ໂຕແມ້, ຟືນ, ໄມ້ຈິງ ແລະ ໄມ້ເຮ້ຍ

**ວິເຄາະບັນຫາ**

ເມື່ອເຮົາໄດ້ຜະລິດຕະພັນທີ່ເປັນບູລະມະສິດແລ້ວຂອງທັງ 2 ບ້ານແລ້ວ.ເຮົາຈະມາວິເຄາະເພື່ອຊອກຫາບັນຫາ, ສາຍເຫດ ແລະ ວິທີແກ້ໄຂ. ຜລິດຕະພັນທີ່ທັງ 2 ບ້ານໄດ້ຄັດເລືອກເອົາເພື່ອຈະເປັນບູລະມະສິດມີຄື: ບ້າຍຫ້ວຍຮຸນນ້ອຍແມ່ນແຂມ, ປໍສາ, ເປືອກເມືອກ, ຄັ່ງ. ບ້ານຫ້ວຍເຫຼັກແມ່ນ ປໍສາ, ແຂມ, ໝາກຕາວ, ໂຕແມ້, ຄັ່ງ

**ການສຳຫຼວດພື້ນທີ່**

ອີງຕາມການສຳຫຼວດ ແລະ ການສຳພາດຊາວບ້ານຜູ້ທີ່ເປັນເຖົ້າແກ່ແນວໂຮມຢູ່ບ້ານສະຫຼຸບໄດ້ວ່າພື້ທີ່ຂອງທັງ 2 ບ້ານແມ່ນມີລັກສະນະຄ້າຍຄືກັນເພາະມີຊາຍແດນອັນດຽວກັນຄືປ່າແມ່ນເປັນປ່າເລົ່າອ່ອນ ແລະ ປ່າປະສົມ. ເຄື່ອງປ່າຂອງດົງທີ່ພົບເຫັນໃນເຂດນີ້ແມ່ນ ເມືອກ, ແຂມ, ຕົ້ນຕາວ, ໝາກປີ, ຜັກກູດນ້ຳ, ຜັກຮາກ, ໄມ້ຊາງ, ໄມ້ຫົກ, ໄມ້ຊອດ, ໄມ້ເຮ້ຍ, ໄມ້ໄລ່, ໄມ້ກໍ່, ໄມ້ຟາວ, ໄມ້ດ່, ໄມ້ຊີ້, ໄມ້ຫຽນ, ເຄືອ3ທ່າງ, ສະຄານ, ເຫັດສະນຸ້ນ, ເຫັດບົ່ ແລະ ອື່ນໆອີກຫຼາຍຊະນິດ.

ນອກຈາການເກັບກຳຂໍ້ມູນຂອງບ້ານແລ້ວ. ຍັງໄດ້ສຳພາດ 3 ລະດັບຄອບຄົບຂອງທັງ 2 ບ້ານອີກເພື່ອເບິ່ງທ່າແຮງຂອງເຄື່ອງປ່າຂອງດົງໃນການສ້າງລາຍຮັບໃຫ້ແກ່ຄອບຄົວ.

- ຄອບຄົວຮັ່ງເຄື່ອງປ່າຂອງດົງແມ່ນບໍ່ມີຄວາມສຳຄັນຫຼາຍເພາະເຂົາເຈົ້າມີລາຍໄດ້ຈາກການຄ້າຂາຍ ແລະ ການບໍລິການອື່ນ.

- ຄອບຄົວປານກາງກໍ່ຄືກັນຈະ ມີລາຍຮັບຈາກຂາຍສັດລ້ຽງ ແລະ ພືດກະສິກຳຫຼາຍກວ່າເຄື່ອງປ່າຂອງດົງ
- ຄອບຄົວຂາດກິນ.
  ບ້ານຫ້ວຍເຫຼັກເຄື່ອງປ່າແມ່ນມີຄວາມສຳຄັນຫຼາຍໃຫ້ແກ່ຄອບຄົວເຊິ່ງສາມດສ້າງລາຍຮັບເຖິງ 86%ຂອງລາຍຮັບທັງໝົດຂອງຄອບຄົວ.

# ຂໍສະເໜີຂອງຊາວກະສິກອນ

**ບ້າຍຫ້ວຍເຫຼັກ** - ຢາກສະເໜີໃຫ້ທາງຂັ້ນເທິ່ງລົງມາເຝິກອົບຮົມການປູກ ແລະ ການເກັບຮັກສາ( ບໍສາ )

- ຢາກໃຫ້ຈັດຕັ້ງໜ່ວຍກວດກາການເກັບຊື້,ຂາຍຢູ່ພາຍໃນບ້ານ ແລະ ລົງກວດກາເບິ່ງຕາຊີງນໍາພໍ່ຄ້າເປັນປະຈໍາ
- ຢາກໃຫ້ມີວິຊາການລົງແນະນໍາການສັງເກດເບິ່ງໝາກຕກວ່າ. ໝາກແບບໃດຈິ່ງເປັນໝາກແກ່ ແລະ ການຕົ້ມຈະໃຊ້ເລວາເທົ່າໃດໝາກຈິ່ງສຸກດີ

**ບ້ານຫ້ວຍຮຸນນ້ອຍ**

- ໃຫ້ທາງຂັ້ນເທິງຕິດຕາມກວດກາເບິ່ງຕາຊີງນໍາພໍຄ້າເປັນປະຈໍາ
- ຢາກໃຫ້ແມ່ ຄ້າວາງມາດຖານຂອງສິນຄ້າອອກມາກ່ອນຈະຮອດລະດູເກັບຊື້
- ຢາກໃຫ້ທາງຂັ້ນລົງມາແນະນໍາຕິກເນັກການປູກໃຫ້ ( ເປືອກເມືອກ )
- ຢາກໃຫ້ຂັ້ນເທິງລົງມາແນະນໍາວິທີກໍາຈັດສັດຕູຂອງຄັ່ງ(ມົດດໍາ)

## ຂໍສະເໜີຂອງນັກວິຊາການ

- **ດ້ານການເຝິກອົບຮົມ**

- ຖ້າມີການເຝິກອົບຮົມPRA ອີກໃຫ້ໃຊ້ເວລາຫຼາຍກ່ວາເກົ່າ, ຄືນບໍ່ໃຫ້ກາຍ 5-7 ຄົນ ແລະ ຄວນທີ່ຈະເອົາຜູ້ທີ່ຈະປະຕິບັດແທ້ໆ ແລະ ເຂົ້າໃຈໜ້າວຽກດີ

- ການອະທິບາຍັວຂໍ້ກິດຈະກໍາຢາກໃຫ້ເວົ້າລະອຽດແລະຈະແຈ້ງຕື່ມເພື່ອໃຫ້ຊາວກະສິກອນເຂົ້າໃຈແລະໄດ້ຄໍາຕອບທີ່ຖືກຕ້ອງ

- ບໍ່ໃຫ້ອອກຄວາມຄິດຄວາມເຫັນກອ່ນຊາວບ້ານ, ຄວນໃຫ້ເຂົາເຈົ້າເປັນຜູ້ຕອບເອງ

- ດ້ານການວິຊາການ

- ຢາກໃຫ້ທາງຫ້ອງການກະສິກໍາສຶກສາເບິ່ງການຕະຫຼາດຂອງຄັ່ງວ່າມີຕະຫຼາດທີ່ແນ່ນອນແລ້ວບໍ່ເພາະປະຈຸບັນປະຊາຊົນນິຍົມກັນປູກຫຼາຍ

- ປັບປູງທາງດ້ານຄຸນນະພາບແລະລາຄາບໍ່ໃຫ້ສິນຄ້າຕົກຕໍ່າ(ບໍສາ, ແຂມ)ຕາກໃຫ້ແຫ້ງ,ຕັດການສັນ

- ຢາກໃຫ້ມີການສົ່ງເສີມປູກເປັນສວນ( ບໍສາ,ແຂມ)
- ຕ້ອງມີການຈັດສັນພື້ນທີ່ປູກເຄື່ອງປ່າຂອງດົງທີ່ຫາຍາກແລະໃກ້ຈະສູນພັນ
- ຢາກໃຫ້ແມ່ຄ້າວາງມາດຖານຂອງສິນຄ້າກອ່ນຮອດລະດູເກັບຊື້
- ຢາກໃຫ້ຈັດຕັ້ງໜ່ວຍກວດກາການເຫັບຊື້ຂສຍຢູ່ພາຍໃນບ້ານ

## ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ

ລາຍຊື່ຜະລິດຕະພັນສຳລັບກິນ, ຂາຍ ແລະ ຊົມໃຊ້

| ບ້ານຫ້ວຍເຫຼັກ | | | ບ້ານ ຫ້ວຍຮຸນນ້ອຍ | | |
|---|---|---|---|---|---|
| ກິນ | ຂາຍ | ຊົມໃຊ້ | ກິນ | ຂາຍ | ຊົມໃຊ້ |
| ໝາກປີ | ເປືອກເມືອກ | ໄມ້ເຮັຍ | ໜໍ່ໄມ້ທີກ | ແຂມ | ໄມ້ຊາງ |
| ຍອດຫວາຍ | ແຂມ | ໄມ້ແຮ້ | ໜໍ່ໄມ້ເຮັຍ | ປໍສາ | ໄມ້ເຮັຍ |
| ສະຄ່ານ | ປໍສາ | ໄມ້ທີກ | ໜໍ່ໄມ້ໄລ່ | ເຄືອ 3 ຫ່າງ | ໄມ້ທີກ |
| ບອນ | ໝາກຕາວ | ໄມ້ຊາງ | ໜໍ່ຂົມ | ໂຕແມ້ | ໄມ້ແຮ້ |
| ໜໍ່ຂົມ | ກຸດເຄືອ | ໄມ້ຊອດ | ໜໍ່ຫວານ | ໜໍ່ທີກ | ໄມ້ຈີງ |
| ໜໍ່ຊາງ | ດອກຜື້ງ | ໄມ້ຈີງ(ໄມ້ເຮືອນ) | ຜັກກູດນ້ຳ | ເປືອກເມືອກ | ຟື້ນ |
| ຜັກຮາກ | ໜໍໄລ່ | ເສັ້ນຫວາຍ | ຜັກກູດງ້ອງ | ຄັ່ງ | ເສັ້ນຫວາຍ |
| ຜັກກູດງ້ອງ | ໜໍ່ທີກ | ເຄືອສ້ຽວ | ໃບບອນ | ຜັກເນົ່າ | ສ້ຽວ |
| ຜັກເນົ່າ | ໜໍ່ເຮັຍ | ໄມ້ຟື້ນ | ຜັກຮາກ | ໝາກຄ່າ | ໃບຕ້ອງກ້ວຍປ່າ |
| ຜັກໝອກ | ໜໍ່ຂົມ | | ຜັກຫວານ | ໝາກຫວາຍ | |
| ຜັກກູດນ້ຳ | ຜັກເນົ່າ | | ຜັກໝອກ | | |
| ໜໍ່ຄ່າ | ໝາກແໜ່ງ | | ຜັກເນົ່າ | | |
| ດອກແຄ | ກຸ້ງ | | ຍອດຫວາຍ | | |
| ດອກບານ | ໝາກຄ່າ | | ໝາກປີ | | |
| ຜັກໄຮ່ | ເຫັດບີ້ | | ຍອດຕາວ | | |
| ໜໍ່ໄລ່ | ເຫັດກະດ້າງ | | ສະຄ່ານ | | |
| ໜໍ່ທີກ | ເຫັດປວກ | | ເຫັດບີ້ | | |
| ໜໍ່ເຮັຍ | ໝາກລີ້ນໄມ້ | | ເຫັດສະນຸ້ນ | | |
| ໜໍ່ຊອດ | ປາ | | ເຫັດຕາບ | | |
| ໜໍ່ລັນ | ໄຄ | | ເຫັດປວກ | | |
| ຜັກຫວານ | ໂຕແມ້ | | ເຫັດຖ່ານ | | |
| ເຫັດປວກ | ເຄືອ 3 ຫ່າງ | | ໝູຫວາຍ | | |
| ເຫັດບີ້ | ກາບລາງ | | ນົກ | | |
| ເຫັດສະນຸ້ນ | ແກ່ນໄມ້ລຽງ | | ຮອກ | | |
| ເຫັດຕາບ | ເບັ້ຍລຽງ | | ຈ້ອນ | | |
| ຍອດຕາວ | ສະຄ່ານ | | ໂລເຕັນ | | |
| ເຫັດກະດ້າງ | | | ໂຕເຈຍ | | |
| ຜັກແວ່ນ | | | ໝູປ່າ | | |
| ປາ | | | ເຫັ້ງນ | | |
| ຫ້ອຍ | | | ອື່ນ | | |

| | | | | | |
|---|---|---|---|---|---|
| ກຸ້ງ | | | ຕູ່ນ | | |
| ປູ | | | ປູຫີນ | | |
| ໄຄ | | | ປາ | | |
| ກັບ-ຂຽດ | | | ຫ້ອຍ | | |
| ອຶ້ນ | | | ກົບ | | |
| ນົກ | | | ຂຽດ | | |
| ຮອກ | | | ໄກ່ປ່າ | | |
| ໝູ | | | ແມງກອກ | | |
| ໝາກແຄນ | | | ຄັນຄານ | | |
| ເຫັດ | | | | | |
| ໝາກລິ້ນໄມ້ | | | | | |
| ໝາກຫວ້າ | | | | | |
| ໝາກແຄ້ງຟ້າ | | | | | |
| ແມງກອກ | | | | | |
| ຈິ່ນາຍ | | | | | |

## ຕາຕະລາງລາຍຮັບບ້ານ ຫ້ວຍເຫຼັກ

| ຊະນິດລາຍຮັບ | ລາຄາ | ຈຳນວນກິໂລ | ຈຳນວນໂຕ | 1ຄອບຄົວມີ | ເບັ້ຍ,ເຫົ້ງາ | ລວມເງິນທັງໝົດ | % | ຄອບຄົວ |
|---|---|---|---|---|---|---|---|---|
| ເຂົ້າເປືອກ | 1300 | | | 300000 | | 12,000,000 | 35.3 | 40 |
| ໝາກເພັດດິບ | 10000 | | | 100000 | | 4,500,000 | 13.2 | 45 |
| ໝາກເພັດແຫ້ງ | 25000 | | | 80000 | | 3,600,000 | 10.6 | 45 |
| ເຄືອງສວ(ຜັກກາດ,ຜັກຫອັມ) | | 1500 | | | | 15,000 | 0.0 | 10 |
| ໝາກງາ | 5000 | 500 | | | | 2,500,000 | 7.3 | 20 |
| ແກ່ໝາກອຶ | 8000 | 1000 | | | | 8,000,000 | 23.5 | 30 |
| ມັແກວ | 1000 | 100 | | | | 100,000 | 0.3 | 50 |
| ແກ່ໝາກຖົ່ວແຮ່ | 8000 | 100 | | | | 800,000 | 2.4 | 20 |
| ໝາກແຕງໄຮ່ | 500 | 5000 | | | | 2,500,000 | 7.3 | 70 |
| ພືດກະສິກຳ | | | | | | 34,015,000 | 100 | |

| | | | | | | | | |
|---|---|---|---|---|---|---|---|---|
| ຂາຍປາລ້ຽງ | 18000 | | | 230000 | | 2,300,000 | 2.1637 | 10 |
| ຂາຍໝູ | 360000 | | 100 | | | 36,000,000 | 33.866 | 70 |
| ຂາຍແບ້ | 225000 | | 20 | | | 4,500,000 | 4.2333 | 8 |
| ສັດປີກ(ເປັດ,ໄກ່) | 20000 | | 300 | | | 6,000,000 | 5.6444 | 50 |
| ຂາຍຄວາຍ | 3500000 | | 9 | | | 31,500,000 | 29.633 | 4 |
| ຂາຍງົວ | 2000000 | | 13 | | | 26,000,000 | 24.459 | 6 |
| ສັດລ້ຽງ | | | | | | 106,300,000 | 100 | |
| ແຂມ | 3000 | 9000 | | | | 27,000,000 | 10.7 | 92 |
| ປໍສາ | 3000 | 10000 | | | | 30,000,000 | 11.9 | 92 |
| ເມືອກ | 5000 | 1500 | | | | 7,500,000 | 3.0 | 92 |
| ເຄືອ 3 ທ່າງ | 1000 | 3000 | | | | 3,000,000 | 1.2 | 92 |
| ກາບລາງ | 1000 | 8000 | | | | 8,000,000 | 3.2 | 92 |
| ຫົວດຸເດືອ(ຂາຍດິບ) | 1000 | 1500 | | | | 1,500,000 | 0.6 | 20 |
| ໝາກຕາວ | 2000 | | | 15000 | | 450,000 | 0.2 | 30 |
| ໝາກປີ | 1000 | | | 400000 | | 4,000,000 | 1.6 | 10 |
| ກຸ້ງໃຫຍ່ | 40000 | | | 1500000 | | 1,500,000 | 0.6 | 1 |
| ໂຕແມ້ | 30000 | 1000 | | | | 30000000 | 11.9 | 92 |
| ເຄັ່ງປູກ | | | | 1500000 | | 138,000,000 | 54.8 | 92 |
| ໝາກຄ່າ | 8000 | 100 | | | | 800,000 | 0.3 | 20 |
| ເຄືອງປ່າຂອງດົງ | | | | | | 251,750,000 | 100 | |
| ຂາຍເຄື່ອງຍ່ອຍ | | | | 1000000 | | 6000000 | 10 | 6 |
| ເກັບຊື້ຂາຍເຄືອງປ່າຂອງດົງ | | | | 500000 | | 4500000 | 8 | 9 |
| ໂຮງສີເຂົ້າ | | | | 200000 | | 1000000 | 2 | 5 |
| ບໍລິກາໂທລະທັດ | | | | 300000 | | 1800000 | 3 | 6 |

| | | | | | | | | |
|---|---|---|---|---|---|---|---|---|
| ບໍລິການລົດໃຫຍ່ | | | | 2000000 | | 2000000 | 3 | 1 |
| ຮັບເໝົາກໍ່ສ້າງ | | | | 1000000 | | 3000000 | 5 | 3 |
| ຂາຍເບັ້ຍໄມ້ລຽງ | 1000 | | | | 300 | 300000 | 1 | 1 |
| ຂາຍເຫັ້ງາ | 3000 | | | | 5000 | 15000000 | 25 | 92 |
| ຂຍາໄມ້ສັກ | | | | 2000000 | | 26000000 | 44 | 13 |
| ລາຍຮັບອື່ໆ | | | | | | 59600000 | 100 | |
| ລວມລາຍຮັບໝົດບ້ານ | | | | | | 451,665,000 | | |

## ຕາຕະລາງລາຍຮັບ ບ້ານຫ້ວຍຮຸນນ້ອຍ

| ຊະນິດລາຍຮັບ | ລາຄາກີບ/ Kg | ຈຳວກິໂລ | ລາຄາ/ ໂຕ | ຈຳວໂຕ | ລາຄາກີບ/ຄຄ | ຄອບຄົວ | ລວມທັງໝົດ | % |
|---|---|---|---|---|---|---|---|---|
| ຄັ່ງ | 13000 | 600 | | | | 58 | 7800000 | 3.33 |
| ແຂມ | 3000 | 10000 | | | | 58 | 30000000 | 12.81 |
| ປໍສາ | 3500 | 5000 | | | | 58 | 17500000 | 7.47 |
| ເປືອກເມືອກ | 5000 | 1000 | | | | 58 | 5000000 | 2.13 |
| ໜໍ່ໄມ້ຫົກ | 500 | 10000 | | | | 58 | 5000000 | 2.13 |
| ເຄືອ3ທ່າງ | 500 | 3000 | | | | 58 | 1500000 | 0.64 |
| ໂຕແມ້ | 50000 | 600 | | | | 58 | 30000000 | 12.81 |
| ຂາຍເຂົ້າ | 1500 | 6000 | | | | | 9000000 | 3.84 |
| ໝາກງາ | 5000 | 10000 | | | | | 50000000 | 21.35 |
| ໝາກເພັດ | 3000 | 1000 | | | | | 3000000 | 1.28 |
| ແກ່ໝາກອື້ | 8000 | 2000 | | | | | 16000000 | 6.83 |
| ໝູ | | | 370000 | 100 | | | 37000000 | 15.80 |
| ແບ້ | | | 200000 | 15 | | | 3000000 | 1.28 |
| ສັດປີກ | | | 18000 | 300 | | | 5400000 | 2.31 |
| ຮັບຈ້າງເສຍຫ້ຍາ | | | | | 200000 | 20 | 4000000 | 1.71 |
| ຮັບຈ້າງເລື້ອຍໄມ້ | | | | | 500000 | 10 | 5000000 | 2.13 |
| ຮັບຈ້າງລ່າວໄຮ່ | | | | | 100000 | 20 | 2000000 | 0.85 |
| ຂາຍເຄື່ອງຍ່ອຍ | | | | | 100000 | 1 | 100000 | 0.04 |
| ຊື້-ຈາຍຄປດ,ພຶດກະສິກຳ | | | | | 400000 | 1 | 400000 | 0.17 |
| ໂຮງສີເຂົ້າ | | | | | 750000 | 2 | 1500000 | 0.64 |
| ບໍລິການໄຟ້າ | | | | | 505000 | 2 | 1010000 | 0.43 |
| ລວມລາຍຮັບ | | | | | | | 234210000 | 100.00 |

## ຂໍ້ມູການສຳພາດ 3 ລະດັບຄອບຄົວ( ຮັ່ງມີ, ປານກາງ, ທຸກຈົນ )

| ລາຍຮັບ-ລາຍຈ່າຍ ຄອບຄົວຮັ່ງມີ | | | | | | |
|---|---|---|---|---|---|---|
| ຄອບຄົວຮັ່ງມີ | ບ້ານ ຫ້ວຍເຫຼັກ | | % | ບ້ານ ຫ້ວຍຮຸນນ້ອຍ | | % |
| ຊະນິດລາຍຮັບ | ປາ(ປາລ້ຽງ) | 270000 | 0.7 | ຂາຍໝູ | 2000000 | 22.9 |
| | ຄັ່ງລ້ຽງ | 16500000 | 39.8 | ສັດປີກ | 500000 | 5.7 |
| | ແຂມ | 2700000 | 6.5 | ແຂມ | 1050000 | 12.0 |
| | ປໍສາ | 2500000 | 6.0 | ຄັ່ງ | 500000 | 5.7 |
| | ເບັ້ຍລ້ຽງ | 3000000 | 7.2 | ແກ່ໝາກອຶ | 300000 | 3.4 |
| | ແວພັຄັ່ງ | 13014000 | 31.4 | ບໍລິກາສີເຂົ້າ | 400000 | 4.6 |
| | ບໍລິກາອື່ໆ | 3500000 | 8.4 | ດອກເບັ້ຍເງິນຝາກ | 4000000 | 45.7 |
| | ລວມ | 41484000 | 100.0 | ລວມລາຍຮັບ | 8750000 | 100 |
| | | | | | | |
| ຊະນິດລາຍຈ່າຍ | ຊື້ເຂົ້າກິ | 6000000 | 18.5 | ເຂົ້າກິ | 5600000 | 81.2 |
| | ອາຫາ | 3000000 | 9.2 | ຊື້ອາຫາ | 100000 | 1.4 |
| | ເຄື່ອງ່ງຮົມ | 4000000 | 12.3 | ຊື້ເຄືອງ່ງຫົ່ມ | 500000 | 7.2 |
| | ຊື້ຢາປົວພະຍາດ | 350000 | 1.1 | ຊື້ຢາປົວພະຍາດ | 100000 | 1.4 |
| | ຊື້ເຄື່ອງໃຊ້ສ້ອຍ | 100000 | 0.3 | ຊື້ເຄືອງໃຊ້ສ້ອຍ | 500000 | 7.2 |
| | ຊື້ລົດແຄບ | 17000000 | 52.4 | ອື້ໆ | 100000 | 1.4 |
| | ຈ່າຍອື້ໆ | 2000000 | 6.2 | ລວມ | 6900000 | 100 |
| | ລວມ | 32450000 | 100 | | | |

| ລາຍຮັບ-ລາຍຈ່າຍ ຄອບຄົວປານກາງ | | | | | | |
|---|---|---|---|---|---|---|
| ຄອບຄົວປານກາງ | ບ້ານ ຫ້ວຍເຫຼັກ | | % | ບ້ານ ຫ້ວຍຮຸນນ້ອຍ | | % |
| ຊະນິດລາຍຮັບ | ປໍສາ | 800000 | 27.9 | ແຂມ | 1200000 | 10.9 |
| | ແຂມ | 1000000 | 34.9 | ປໍສາ | 500000 | 4.6 |
| | ເປືອກເມືອກ | 150000 | 5.2 | ເມືອກ | 500000 | 4.6 |
| | ເຄືອ 3 ຫາງ | 200000 | 7.0 | 3 ຫາງ | 200000 | 1.8 |
| | ໂຕແມ້ | 500000 | 17.5 | ໝໍ່ຫົກ | 300000 | 2.7 |
| | ກາບລາງ | 20000 | 0.7 | ຜັກປ່າ | 200000 | 1.8 |
| | ຄັ່ງປ່ອຍ | 195000 | 6.8 | ໝາກງາ | 800000 | 7.3 |
| | ເຄືອງປ່າຂອງດົງ | 2865000 | 100 | ໝາກເຜັດ | 500000 | 4.6 |
| | ໝາກງາ | 1350000 | 77.1 | ໝາກແຕງ | 350000 | 3.2 |

| | | | | | | |
|---|---|---|---|---|---|---|
| | ໝາກເພັດ | 400000 | 22.9 | ຢາສູບ | 300000 | 2.7 |
| | ພືດກະສິກຳ | 1750000 | 100 | ແກ່ໝາກອື | 500000 | 4.6 |
| | ໝູ | 2100000 | 51.2 | ຜັກສວຄົວ | 300000 | 2.7 |
| | ງົວ | 2000000 | 48.8 | ເຂົ້າເປືອກ | 750000 | 6.8 |
| | ສັດລ້ຽງ | 4100000 | 100 | ງົວ | 1300000 | 11.9 |
| | ຮັບຈ້າງປຸກເຮືອ | 3500000 | 17.7 | ໝູ | 2906000 | 26.5 |
| | ຮັບຈ້າງປິ່ນປົວຄົນເຈັບ | 2500000 | 12.6 | ສັດປີກ | 360000 | 3.3 |
| | ດອກເບັ້ຍເງີກູ້ຢື | 1800000 | 9.1 | ລວມ | 10966000 | 100 |
| | ລູກຝາກໃຫ້ | 12000000 | 60.6 | | | |
| | ລາຍຮັບອື່ນໆ | 19800000 | 100 | | | |
| | ລວມ | 28515000 | | | | |
| | | | | | | |
| ຊະນິດລາຍຈ່າຍ | ຊື້ອາຫານ | 500000 | 2.3 | ເຂົ້າກິນ | 800000 | 25.4 |
| | ຊື້ເຄື່ອງນຸ່ງຮົມ | 3000000 | 13.7 | ຊື້ອາຫານ | 500000 | 15.9 |
| | ຊື້ໃຊ້ສອຍ | 700000 | 3.2 | ຊື້ເຄືອງນຸ່ງຫົ່ມ | 1000000 | 31.8 |
| | ຊື້ຢາກິນ | 200000 | 0.9 | ຊື້ຢາປົວພະຍາດ | 500000 | 15.9 |
| | ຊື້ໂຮງສີເຂົ້າ | 4300000 | 19.6 | ເສຍພາສີ | 45000 | 1.4 |
| | ຊື້ລົດຈັກ | 5200000 | 23.7 | ຈ່າຍອື່ນໆ | 300000 | 9.5 |
| | ຊື້ທໍລະທັດ | 2600000 | 11.8 | ລວມ | 3145000 | 100 |
| | ລົງທືຊື້ຢາມາຂາຍ | 1200000 | 5.5 | | | |
| | ຊື້ແວພັຄັ່ງ | 2300000 | 10.5 | | | |
| | ຊື້ແວພັສັດ | 1700000 | 7.7 | | | |
| | ເສຍຄ່າພາສີ | 52000 | 0.2 | | | |
| | ຈ່າຍອື່ນໆ | 200000 | 0.9 | | | |
| | ລວມ | 21952000 | 100 | | | |

| ລາຍຮັບ-ລາຍຈ່າຍ ຄອບຄົວທຸກຈົນ | | | | | | |
|---|---|---|---|---|---|---|
| ຄອບຄົວທຸກຈົນ | ບ້ານ ຫ້ວຍເຫຼັກ | | % | ບ້ານ ຫ້ວຍຮຸນນ້ອຍ | | % |
| ຊະນິດລາຍຮັບ | ແຂມ | 700000 | 12.3 | ແຂມ | 500000 | 11.2 |
| | ປໍສາ | 600000 | 10.5 | ປໍສາ | 300000 | 6.7 |
| | ເປືອກເມືອກ | 500000 | 8.8 | ໂຕແມ້ | 150000 | 3.4 |
| | ໝາກຕາວ | 300000 | 5.3 | ເມືອກ | 300000 | 6.7 |
| | ຄັ່ງ | 2000000 | 35.1 | 3 ທາງ | 150000 | 3.4 |
| | ກຸ້ງ,ປາ | 800000 | 14.0 | ໝໍ່ທົກ | 400000 | 9.0 |
| | ເຄືອງປ່າຂອງດົງ | 4900000 | 86.0 | ຜັກຮາກ,ໂເາ | 20000 | 0.4 |

| | | | | | | |
|---|---|---|---|---|---|---|
| | ເຂົ້າ | 400000 | 7.0 | ໝາກຂ່າ | 15000 | 0.3 |
| | ຜັກສວນຄົວ | 400000 | 7.0 | ໝາກງາ | 60000 | 1.3 |
| | ພືດກະສິກຳ | 800000 | 14.0 | ງົວ | 1500000 | 33.7 |
| | ລວມລາຍຮັບທັງໝົດ | 5700000 | 100.0 | ແບ້ | 400000 | 9.0 |
| | | | | ໝູ | 420000 | 9.4 |
| | | | | ຄ່າແຮງງານຖາງໄຮ່ | 200000 | 4.5 |
| | | | | ຕີຜ້າ | 30000 | 0.7 |
| | | | | ລວມ | 4445000 | 100 |
| | | | | | | |
| ຊະນິດລາຍຈ່າຍ | ຊື້ເຂົ້າກິນ | 800000 | 25.3 | ເຂົ້າກິນ | 4200000 | 83.5 |
| | ຊື້ອາຫານ | 600000 | 19.0 | ຊື້ອາຫານ | 100000 | 2.0 |
| | ຊື້ເຄື່ອງນຸ່ງຮົມ | 860000 | 27.2 | ຊື້ເຄື່ອງນຸ່ງຫົ່ມ | 400000 | 8.0 |
| | ຊື້ຢາປົວພະຍາດ | 200000 | 6.3 | ຊື້ຢາປົວພະຍາດ | 50000 | 1.0 |
| | ຊື້ເຄືອງຮັບໃຊ້ | 100000 | 3.2 | ຊື້ເຄືອງໃຊ້ສ້ອຍ | 180000 | 3.6 |
| | ເສຍພາສີທີ່ດິນ | 100000 | 3.2 | ຈ່າຍອື່ນໆ | 100000 | 2.0 |
| | ຊື້ແວພັນຄັ່ງ | 200000 | 6.3 | ລວມ | 5030000 | 100 |
| | ຈ່າຍອື່ນໆ | 300000 | 9.5 | | | |
| | ລວມລາຍຈ່າຍ | 3160000 | 100 | | | |